ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25 - 31 ຕຸລາ 2023
ປີທີ 12
ສະບັບທີ 943
ລາຍສັບປະດາ

## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບລັດຖະມົນຕີກະຊວງການຕ່າງປະເທດຍີ່ປຸ່ນ



(ສພຊ) ວັນທີ 11 ຕຸລາ 2023 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ຄາມິກາວະ ໂຍໂກະ ລັດຖະມົນຕີກະຊວງການຕ່າງປະເທດແຫ່ງ ປະເທດຍີ່ປຸ່ນ ພ້ອມດ້ວຍຄະນະ; ໃນໂອກາດທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນລະຫວ່າງວັນທີ 11-12 ຕຸລາ 2023.

ໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ຂອງທ່ານ ນາງ ຄາມິກາວະ ໂຍໂກະ ໃນເທື່ອນີ້, ພ້ອມທັງຝາກຄວາມຢື້ຢາມຖາມຂ່າວເຖິງທ່ານ ຮິໂຣຢູກິ ໂຮໂຊດາ (Hosoda Hiroyuki) ປະທານສະພາຜູ້ແທນລາສະດອນ (ສະພາຕໍ່າ) ແຫ່ງ ປະເທດຍີ່ປຸ່ນ ແລະ ທ່ານ ຮິເດຮິສະ ໂອສືຈິ (Hidehisa OTSUJI), ປະທານສະພາສູງ ແຫ່ງ ປະເທດຍີ່ປຸ່ນ. ທ່ານໄດ້ກ່າວສະແດງຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ເຫັນວ່າຕະຫຼອດໄລຍະຜ່ານມາ ສາຍພົວພັນມິດຕະພາບ ແລະ ການຮ່ວມມືແບບຄູ່ຮ່ວມຍຸດທະສາດ ລະຫວ່າງສອງ

ອ່ານຕໍ່ໜ້າ 2



## ແຈ້ງການ
### ຂອງຄະນະເລຂາທິການສະພາແຫ່ງຊາດ

ອີງຕາມ ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ມາດຕາ 59 ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາແຫ່ງຊາດ ແລະ ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 323/ຄປຈ, ລົງວັນທີ 17 ຕຸລາ 2023.

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງອົງການຈັດຕັ້ງພັກ, ລັດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຊາບວ່າ: ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 31 ຕຸລາ - 21 ພະຈິກ 2023 ຢູ່ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງແຈ້ງມາເພື່ອຊາບດ້ວຍ.

ຜູ້ແທນປະຊາຊົນ PHOUTHEN PASAXON

## ສພຊ ເຊື່ອມຊຶມ ແລະ ຜັນຂະຫຍາຍຜົນສຳເລັດກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI

(ສພຊ) ເພື່ອເຮັດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ນໍາພາຈັດຕັ້ງເຊື່ອມຊຶມບັນດາເອກະສານ ກ່ຽວກັບຜົນສຳເລັດການດຳເນີນກອງປະຊຸມກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI, ຄຳສັ່ງຂອງຄະນະເລຂາທິການສູນກາງພັກ, ຄຳແນະນຳ ຂອງຄະນະຈັດຕັ້ງສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳ



ເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ເຊິ່ງເປັນເອກະສານທີ່ມີຄວາມສຳຄັນ ແລະ ເປັນບ່ອນອີງໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການເຄື່ອນໄຫວວຽກງານຂອງແຕ່ລະພາກສ່ວນ, ເຮັດໃຫ້ແນວທາງນະໂຍບາຍຂອງພັກ ໄດ້ຮັບການຈັດຕັ້ງປະຕິບັດເຂົ້າໃນວຽກງານຂອງສະພາແຫ່ງຊາດຢ່າງເລິກເຊິ່ງ ແລະ ນຳໝາກຜົນມາສູ່ປະເທດຊາດ ກໍຄື ປະຊາຊົນບັນດາເຜົ່າ; ໃນວັນທີ 20 ຕຸລາ 2023 ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຊື່ອມຊຶມ, ຜັນຂະຫຍາຍຜົນສຳເລັດກອງປະຊຸມຄົບຄະ

ອ່ານຕໍ່ໜ້າ 3

## ຜົນສຳເລັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6



(ສພຊ) ວັນທີ 20 ຕຸລາ 2023 ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ສຳເລັດລົງຢ່າງເປັນທາງການ ຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ ພາຍຫຼັງດຳເນີນມາເປັນເວລາ 5 ວັນເຕັມ ທີ່ສູນຮ່ວມມືສາກົນ ແລະ ຝຶກອົບຮົມ (ICTC) ນະຄອນຫຼວງວຽງຈັນ ນັບແຕ່ວັນທີ 16 ຕຸລາເປັນຕົ້ນມາ ໂດຍການເປັນປະທານປິດກອງປະຊຸມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານຄະນະປະຈຳສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສະມາຊິກລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ເລຂາທິການສະພາແຫ່ງຊາດ, ຮອງລັດຖະມົນຕີ, ຮອງປະທານກຳມາທິການ ແລະ ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ພ້ອມດ້ວຍແຂກຖືກເຊີນ ແລະ ພາກສ່ວນກ່ຽວຂ້ອງ.

ຕະຫຼອດໄລຍະດຳເນີນກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດທີ່ສ້າງສັນ, ບັນ

ອ່ານຕໍ່ໜ້າ 2

## ຖະແຫຼງຂ່າວການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX



(ສພຊ) ປະຕິບັດຕາມ ມາດຕາ 59 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນປະຈຳປີຂອງສະພາແຫ່ງຊາດ, ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງປີ 2020) ການກະກຽມ ແລະ ຮຽກໂຮມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX, ໂດຍປະຕິບັດຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບ ເລກທີ 323/ຄປຈ, ລົງວັນທີ 17/10/2023 ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX; ເພື່ອປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວ ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ໄດ້ປະສານສົມທົບກັບລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການ

ອ່ານຕໍ່ໜ້າ 4

## ສຳເລັດການຕິດຕາມກວດກາຮ່ວມລະຫວ່າງ 3 ສະພາແຫ່ງຊາດ ກຳປູເຈຍ-ລາວ-ຫວຽດນາມ (CLV)

(ສພຊ) ໃນລະຫວ່າງວັນທີ 17-18 ຕຸລາ 2023, ຄະນະຕິດຕາມກວດກາຮ່ວມລະຫວ່າງ 3 ສະພາແຫ່ງຊາດ ກຳປູເຈຍ-ລາວ-ຫວຽດນາມ (CLV) ໄດ້ເຄື່ອນໄຫວເຮັດວຽກຢູ່ແຂວງຢາລາຍ ແລະ ຂວາງກອນຕູມ ຂອງ ສສ. ຫວຽດນາມ ເຊິ່ງຄະນະຜູ້ແທນຂອງສະພາແຫ່ງຊາດ ແຫ່ງລາຊະອານາຈັກກຳປູເຈຍ ນຳໂດຍທ່ານ ສຸ ຍາລາ ປະທານຄະນະກຳມາທິການການຕ່າງປະເທດ, ການຮ່ວມມືສາກົນ, ສື່ ແລະ




ຂໍ້ມູນຂ່າວສານ ພ້ອມດ້ວຍຄະນະ; ຄະນະຜູ້ແທນ ຂອງສະພາແຫ່ງຊາດ ແຫ່ງ ສປປ ລາວ ນຳໂດຍທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ກຳມະການຄະນະປະຈຳ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ພ້ອມດ້ວຍ

ອ່ານຕໍ່ໜ້າ 8

**ຂໍ່ານັບຮັບຕ້ອນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

## ປະທານສະພາ...

(ຕໍ່ຈາກໜ້າ 1)



ປະເທດ ລາວ-ຍີ່ປຸ່ນ ກໍຄື ລະຫວ່າງ ສອງອົງການນິຕິບັນຍັດແມ່ນໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ, ເຂົ້າສູ່ລວງເລິກນັບມື້ນັບຫຼາຍຂຶ້ນ, ນັບແຕ່ໄດ້ມີການຍົກລະດັບການພົວພັນຮ່ວມມືຈາກຄູ່ຮ່ວມມືຮອບດ້ານມາເປັນຄູ່ຮ່ວມຍຸດທະສາດ ໃນປີ 2015 ເຊິ່ງສະແດງອອກສອງປະເທດໄດ້ມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ ນັບແຕ່ສູນກາງລົງຮອດທ້ອງຖິ່ນນຳກັນຢ່າງເປັນປົກກະຕິ; ສປປ ລາວ ຍາມໃດກໍຕີລາຄາສູງ ແລະ ສະແດງຄວາມຂອບໃຈເປັນຢ່າງສູງຕໍ່ລັດຖະບານຍີ່ປຸ່ນທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສປປ ລາວ ໃນການພັດທະນາດ້ານພື້ນຖານໂຄງລ່າງ, ດ້ານເສດຖະກິດ, ວັດທະນະທຳ, ການສຶກສາ, ສາທາລະນະສຸກ ແລະ ແຮງງານ.

ທ່ານປະທານສະພາແຫ່ງຊາດລາວ ໄດ້ກ່າວຕື່ມວ່າ: ໃນໂອກາດພົບປະຄັ້ງນີ້, ສອງປະທານສະພາແຫ່ງຊາດ ກໍໄດ້ຕີລາຄາຄືນການພົວພັນຮ່ວມມືລະຫວ່າງ ສອງອົງການນິຕິບັນຍັດ ແລະ ຮ່ວມກັນປຶກສາຫາລືທິດທາງການພົວພັນຮ່ວມມືໃນຕໍ່ໜ້າ ໂດຍພ້ອມກັນສ້າງເງື່ອນໄຂໃຫ້ສອງອົງການນິຕິບັນຍັດແລກປ່ຽນຢ້ຽມຢາມ ຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນ. ໃນນັ້ນ, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ກໍມີແຜນການຢ້ຽມຢາມປະເທດຍີ່ປຸ່ນ ຢ່າງເປັນທາງການ ໃນປີ 2024 ແລະ ຄາດວ່າຈະລົງນາມໃນບົດບັນທຶກຊ່ວຍຈຳ ວ່າດ້ວຍການຮ່ວມມືລະຫວ່າງ ສະພາແຫ່ງຊາດລາວ ແລະ ລັດຖະສະພາຍີ່ປຸ່ນ ເຊິ່ງສະພາແຫ່ງຊາດລາວ ກໍໄດ້ສົ່ງບົດບັນທຶກດັ່ງກ່າວໃຫ້ລັດຖະສະພາຍີ່ປຸ່ນພິຈາລະນາແລ້ວ ແລະ ສືບຕໍ່ຊຸກຍູ້ການພົວພັນຮ່ວມມືໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ໂດຍສະເພາະປີ 2024 ທີ່ຈະມາເຖິງນີ້, ສປປ ລາວ ຈະເປັນປະທານອາຊຽນ ແລະ ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາ ລະຫວ່າງຊາດອາຊຽນ ຄັ້ງທີ 45 (AIPA-45) ແລະ ຫວັງຢ່າງຍິ່ງວ່າ ຍີ່ປຸ່ນຈະສືບຕໍ່ສະໜັບສະໜູນ ສປປ ລາວ ເຮັດສຳເລັດໜ້າທີ່ດັ່ງກ່າວ.

ຈາກນັ້ນ, ທ່ານ ນາງ ຄາມິກາວະ ໂຢໂກະ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ; ພ້ອມນັ້ນ, ຍັງໄດ້ລາຍງານໃຫ້ຮູ້ກ່ຽວກັບຈຸດປະສົງຂອງການມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້ ແລະ ຜົນສຳເລັດໃນການພົບປະສອງຝ່າຍລະຫວ່າງ ກະຊວງການຕ່າງປະເທດ ແຫ່ງ ປະເທດຍີ່ປຸ່ນ ແລະ ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ເຊິ່ງສອງຝ່າຍໄດ້ຮ່ວມກັນຕີລາຄາຄືນການພົວພັນຮ່ວມມື ລະຫວ່າງສອງກະຊວງການຕ່າງປະເທດໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ສອງລັດຖະບານ ກໍຄືສອງກະຊວງການຕ່າງປະເທດ.

## ຜົນສຳເລັດ...

(ຕໍ່ຈາກໜ້າ 1)



ດາສະມາຊິກສະພາແຫ່ງຊາດໄດ້ຄົ້ນຄວ້າປະກອບຄຳເຫັນຢ່າງກົງໄປກົງມາ, ມີຄວາມເປັນເອກະພາບສູງ ແລະ ໄດ້ສຸມທຸກເຫື່ອແຮງ, ສະຕິປັນຍາ ແລະ ນຳເອົາແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ສະພາບຄວາມເປັນຈິງ ຢູ່ແຕ່ລະທ້ອງຖິ່ນມາປະກອບຄຳເຫັນ ແລະ ສະເໜີ ເພື່ອເປັນຂໍ້ມູນໃຫ້ກະຊວງ, ອົງການກ່ຽວຂ້ອງນຳໄປຄົ້ນຄວ້າ, ປັບປຸງເຂົ້າໃສ່ເນື້ອໃນບົດລາຍງານ,ບັນດາຮ່າງກົດໝາຍໃນຂົງເຂດວຽກງານຕ່າງໆ ໃຫ້ສົມບູນຄົບຖ້ວນກ່ອນຈະນຳເຂົ້າພິຈາລະນາຢູ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

ໂອກາດດັ່ງກ່າວ, ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນ ແລະ ໃຫ້ທິດຊີ້ນຳຕໍ່ທີ່ປະຊຸມ ເຊິ່ງມີເນື້ອໃນບາງຕອນສຳຄັນວ່າ: ການດຳເນີນກອງປະຊຸມຍົກສູງຄຸນນະພາບເນື້ອໃນຄັ້ງນີ້ ແມ່ນເພື່ອສ້າງເງື່ອນໄຂໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ເຂົ້າໃຈເນື້ອໃນຂອງບັນດາເອກະສານທີ່ຈະພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ຈະແຈ້ງ; ສະນັ້ນ, ບັນຫາໃດທີ່ມີຄວາມເຂົ້າໃຈ ແລະ ເອກະພາບສູງໃນກອງປະຊຸມສຳມະນາແລ້ວ ກໍຫຼຸດຜ່ອນການປະກອບຄຳເຫັນຕໍ່ບົດດັ່ງກ່າວ ສ່ວນບັນຫາທີ່ຍັງບໍ່ທັນເຂົ້າໃຈເປັນເອກະພາບກັນໃຫ້ຄົ້ນຄວ້າ, ພິຈາລະນາ ແລະ ສະເໜີວິທີແກ້ໄຂຍົກຂຶ້ນຢູ່ກອງປະຊຸມສະພາແຫ່ງຊາດຢ່າງສ້າງສັນ, ມີເຫດຜົນ ແລະ ແທດຕົວຈິງ. ບັນດາເນື້ອໃນທີ່ນຳມາຄົ້ນຄວ້າ, ປະກອບຄຳເຫັນຄັ້ງນີ້ ເຫັນວ່າບັນດາທ່ານທີ່ເຂົ້າຮ່ວມໄດ້ມີຄວາມເຂົ້າໃຈ, ເອກະພາບຫຼາຍບັນຫາພ້ອມທັງໄດ້ຮັບການຊີ້ແຈງຢ່າງລະອຽດດີສົມຄວນ, ບັນດາທ່ານສະມາຊິກສະພາແຫ່ງຊາດປະກອບຄຳເຫັນລົງເລິກຕໍ່ເນື້ອໃນຕ່າງໆຢ່າງກົງໄປກົງມາ ເພື່ອເປັນຂໍ້ມູນໃຫ້ແກ່ພາກສ່ວນຕ່າງໆນຳໄປປັບປຸງເພີ່ມຕື່ມ ແລະ ສ້າງຄວາມເປັນເອກະພາບ, ຮັບປະກັນໃຫ້ເນື້ອໃນສາມາດນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ມີຄຸນນະພາບ ແລະ ໄດ້ຮັບຜົນສຳເລັດຕາມແຜນການທີ່ວາງໄວ້.

**(ກຸກກິກ ບຸດດາໄຊ)**




## ເລື່ອງ ເດັ່ນ ຂ່າວ ເດັດ

*# ຄັດໂດຍ: ທອມສະນິດ*

❐ *ອົງການອະນາໄມໂລກ ໄດ້ປະກາດຢ່າງເປັນທາງການ ວ່າ ສປປ ລາວ ໄດ້ລຶບລ້າງພະຍາດຊ້າງ ບໍ່ໃຫ້ເປັນບັນຫາທາງສາທາລະນະສຸກອີກຕໍ່ໄປ ພິທີສະເຫຼີມສະຫຼອງການລຶບລ້າງພະຍາດ ແມ່ນຈະຈັດຂຶ້ນທີ່ແຂວງອັດຕະປື ໃນວັນທີ 27 ຕຸລາ 2023 ເພື່ອເປັນການສະແດງເຖິງຄວາມສຳເລັດດັ່ງກ່າວ. ພະຍາດຂາຊ້າງ ແມ່ນພະຍາດແມ່ກາຝາກທີ່ມີຍຸງເປັນພາຫະນຳເຊື້ອ ເຊິ່ງຈະພາໃຫ້ອະໄວຍະວະບາງສ່ວນຂອງຮ່າງກາຍໃຫຍ່ຂຶ້ນ ເຊິ່ງສົ່ງຜົນໃຫ້ມີອາການເຈັບປວດ, ພິການແບບຮຸນແຮງ, ຖືກລັງກຽດ ແລະ ມີຄວາມຫຍຸ້ງຍາກໃນທາງດ້ານການເງິນຕາມມາ. ໃນປີ 2002, ໃນ ສປປ ລາວ ມີພຽງແຂວງອັດຕະປືເທົ່ານັ້ນທີ່ມີການລະບາດແບບບົ່ມຊ້ອນ ເຊິ່ງພະນັກງານສາທາລະນະສຸກໃນທ້ອງຖິ່ນ ສົມທົບກັບຄູ່ຮ່ວມງານສາກົນກໍໄດ້ມີການດຳເນີນກິດຈະກຳການກິນຢາປິ່ນປົວ ໃນຊຸມຊົນທີ່ມີຄວາມສ່ຽງນັບແຕ່ປີ 2012-2017 ແລະ ຍັງມີການຊ່ວຍເຫຼືອໃນດ້ານການປິ່ນປົວ, ການລົງເກັບກຳຂໍ້ມູນ ແລະ ການຊ່ວຍເຫຼືອທາງດ້ານວິຊາການ.*

***ໜສພ. ປະເທດລາວ 18/10/2023***

❐ *ປັດຈຸບັນ, ກະຊວງສາທາລະນະສຸກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ອອກລະບຽບຕໍ່ຜູ້ທີ່ລະເມີດສູບຢາໃນເຂດຫ້າມສູບຢາ ບໍ່ວ່າຈະເປັນຢາສູບທົ່ວໄປ ຫຼືຢາສູບໄຟຟ້າຈະຖືກປັບໃໝສູງເຖິງ400.000ກີບ. ພ້ອມນີ້, ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກຍັງໄດ້ອອກກົດລະບຽບວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ) ປີ 2021 ໃນມາດຕາຕ່າງໆກ່ຽວກັບຢາສູບ.*

***ໜສພ. ປະຊາຊົນ 23/10/2023***

❐ *ສູນຮັບແຈ້ງເຫດ-ສັ່ງການ ນະຄອນຫຼວງວຽງຈັນ (ສູນ CCC) ໄດ້ເປີດນຳໃຊ້ຢ່າງເຕັມຮູບແບບທີ່ໂຮງໝໍມິດຕະພາບ ເຊິ່ງສູນໄດ້ເປີດນຳໃຊ້ເປັນຄັ້ງທຳອິດຢູ່ລາວ ປັດຈຸບັນ, ໄດ້ເປີດໃຫ້ປະຊາຊົນສາມາດໂທເຂົ້າສາຍດ່ວນ 1195 ເພື່ອແຈ້ງເຫດການສຸກເສີນໄດ້ຕະຫຼອດ 24 ຊົ່ວໂມງທຸກວັນ ສູນເປັນສູນຮັບແຈ້ງເຫດການສຸກເສີນທີ່ຂຶ້ນກັບໂຮງໝໍມິດຕະພາບໂດຍກົງ ແລະ ມີສະຖານທີ່ຕັ້ງຢູ່ໂຮງໝໍມິດຕະພາບ ມີພາລະບົດບາດສັ່ງການໃຫ້ລົດກູ້ໄພ 5 ໜ່ວຍງານອອກຮັບເຫດ ຄື: ໜ່ວຍກູ້ໄພຊ່ວຍເຫຼືອຄົນທຸກຍາກ 1623, ໜ່ວຍກູ້ໄພນະຄອນຫຼວງວຽງຈັນ 1624, ໜ່ວຍກູ້ໄພກາແດງ 1625, ໜ່ວຍກູ້ໄພມູນນິທິຈີນ 1628 ແລະ ໜ່ວຍກູ້ໄພຮ່ວມໃຈ 1630.*

***ໜສພ. ວຽງຈັນໃໝ່ 23/10/2023***

## ສພຊ...

(ຕໍ່ຈາກໜ້າ 1)

ນະກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI, ຄຳສັ່ງຂອງຄະນະເລຂາທິການສູນກາງພັກ, ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ ເຂົ້າຮ່ວມມີບັນດາສະຫາຍຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານປະທານ-ຮອງປະທານກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ, ສະມາຊິກພັກ, ພະນັກງານ-ລັດຖະກອນເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ, ໄດ້ຮັບຟັງການເຜີຍແຜ່ຄຳສັ່ງແນະນຳວ່າດ້ວຍການຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ຂອງພັກ ສະບັບເລກທີ 434/ຄລສພ, ລົງວັນທີ 18 ກັນຍາ2023; ຮັບຟັງການເຜີຍແຜ່ຄຳແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 23/ຄອສພ, ລົງວັນທີ 28 ກັນຍາ 2023; ເຜີຍແຜ່ມະຕິກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI; ເຜີຍແຜ່ເອກະສານຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນ ທົ່ວປະເທດ ຄັ້ງທີ XI, ເຜີຍແຜ່ເອກະສານຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໃນໄລຍະກາງສະໄໝ; ເຜີຍແຜ່ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ກາງສະໄໝ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025; ເຜີຍແຜ່ບົດສຳຫຼວດການນຳພາລວມໃນໄລຍະກາງສະໄໝຂອງຄະນະບໍລິຫານງານສູນກາງພັກສະໄໝທີ XI; ເຜີຍແຜ່ຄວາມເຫັນສະຫຼຸບວາລະເປີດກວ້າງ ແລະ ວາລະພາຍໃນ ຂອງສະຫາຍເລຂາທິການໃຫຍ່; ເຜີຍແຜ່ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລ່ອງເລິກສ້າງການຫັນປ່ຽນແປງທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ (ສະບັບເລກທີ 05/ຄບສພ, ລົງວັນທີ 5 ກັນຍາ 2023); ເຜີຍແຜ່ແຜນດຳເນີນງານ ເພື່ອຜັນຂະຫຍາຍມະຕິວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ ສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ ສະບັບເລກທີ 432/ຄລສພ, ລົງວັນທີ 8 ກັນຍາ 2023; ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 8 ສິງຫາ 2023; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ສະບັບເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023; ຄຳແນະນຳຂອງຄະນະກວດກາສູນກາງພັກ ກ່ຽວກັບການກະກຽມ ແລະ ດຳເນີນຊີວິດການເມືອງທ້າຍສະໄໝ ກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ສະບັບເລກທີ 285/ຄກສພ, ລົງວັນທີ 15 ກັນຍາ 2023; ພ້ອມນັ້ນ, ກອງປະຊຸມຍັງໄດ້ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການອະນຸມັດໃຫ້ພະນັກງານຮັບອຸດໜູນບຳນານຕື່ມອີກ.

ໃນຕອນທ້າຍກອງປະຊຸມ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມວ່າ: ໃນຕະຫຼອດໄລຍະກາງສະໄໝຜ່ານມາ, ຄະນະບໍລິຫານງານສູນກາງພັກ ໄດ້ສືບຕໍ່ນຳພາ-ຊີ້ນຳການຈັດຕັ້ງປະຕິບັດມະຕິ XI ຢ່າງຫ້າວຫັນ ໃນທ່າມກາງທີ່ສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ທີ່ຜັນແປຢ່າງສະຫຼັບສັບຊ້ອນ ບວກກັບສະພາບຄວາມຫຍຸ້ງຍາກພາຍໃນປະເທດພວກເຮົາທີ່ຊໍ້າເຮື້ອມາຫຼາຍປີ, ແຕ່ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະບໍລິຫານງານສູນກາງພັກ, ການບໍລິຫານ-ຄຸ້ມຄອງລັດຂອງລັດຖະບານ, ການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ເຮັດໃຫ້ພວກເຮົາສາມາດແກ້ໄຂບໍ່ໃຫ້ຕົກເຂົ້າສູ່ວິກິດການ; ປະເທດເຮົາຍັງມີສະຖຽນລະພາບດ້ານການເມືອງໜັກແໜ້ນ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ໄດ້ຕາມຄາດໝາຍວາງໄວ້ 4,1% (ແຜນສະພາຮັບຮອງ 4%) ການພົວພັນກັບຕ່າງປະເທດ ສືບຕໍ່ໄດ້ຮັບການເປີດກວ້າງ, ວຽກງານປັບປຸງພັກ, ກົງຈັກການຈັດຕັ້ງໄດ້ມີຜົນສຳເລັດທີ່ຕັ້ງໜ້າ, ປະຊາຊົນໄດ້ເສີມຂະຫຍາຍນໍ້າໃຈຮັກຊາດ, ຮັກສາຄວາມສາມັກຄີເປັນປຶກແຜ່ນ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີຄວາມຕື່ນຕົວເປັນເຈົ້າພັດທະນາ ເພື່ອຫຼຸດພົ້ນອອກຈາກຄວາມທຸກຍາກ. ພ້ອມກັນນັ້ນ, ກອງປະຊຸມກາງສະໄໝ ກໍໄດ້ຍົກໃຫ້ເຫັນດ້ານຄົງຄ້າງຈຳນວນໜຶ່ງ ທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ເຊິ່ງບັນດາອົງຄະນະພັກແຕ່ລະຂັ້ນ ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂຕາມຂອບເຂດວຽກງານຂອງແຕ່ລະພາກສ່ວນ.

ສຳລັບທິດທາງ-ຄາດໝາຍໃຫຍ່ໃນທ້າຍສະໄໝທີ XI ຄະນະບໍລິຫານງານສູນກາງພັກ ໄດ້ຕົກລົງຈະໄດ້ ສືບຕໍ່ຮັບປະກັນໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ ແລະ ຄວາມໝັ້ນຄົງຢ່າງໜັກແໜ້ນ, ການ ຈັດຕັ້ງປະຕິບັດບັນດາຄາດໝາຍ ທີ່ໄດ້ກຳນົດໄວ້ໃນມະຕິ, ແຜນການໃຫ້ບັນລຸຜົນ; ສ້າງພື້ນຖານ ແລະ ຖ່ອງທ່າໃໝ່ໃນການນຳພາປະເທດຊາດ ໃຫ້ຫຼຸດພົ້ນອອກຈາກສະຖານະດ້ອຍພັດທະນາ, ຍົກສູງບົດບາດນຳພາ ແລະ ລັກສະນະນຳໜ້າຂອງພັກ ເພື່ອຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນໃໝ່ ທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃຫ້ເປັນຮູບປະທຳ.

ບັນດາເອກະສານ ກ່ຽວກັບຜົນສຳເລັດການດຳເນີນກອງປະຊຸມກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເປັນເອກະສານທີ່ມີຄວາມສຳຄັນຫຼາຍ ໃນການຈັດຕັ້ງຜັນຂະຫຍາຍເຂົ້າໃນການເຄື່ອນໄຫວ ວຽກງານຂອງບັນດາກົງການຈັດຕັ້ງພາຍໃນສະພາແຫ່ງຊາດ ໂດຍສະເພາະບັນດາກຳມາທິການ, ຄະນະເລຂາທິການ ສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ລວມທັງບັນດາສະຫາຍສະມາຊິກພັກ, ພະນັກງານ-ລັດຖະກອນ ທົ່ວສະພາແຫ່ງຊາດ ໃຫ້ນຳເອົາເນື້ອໃນຈິດໃຈຂອງເອກະສານດັ່ງກ່າວ ສືບຕໍ່ຄົ້ນຄວ້າຮໍ່າຮຽນໃຫ້ ເລິກເຊິ່ງ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ ໃຫ້ມີການຫັນປ່ຽນໃໝ່ທີ່ຕັ້ງໜ້າຂຶ້ນຕື່ມ.

**(ໄຊໂສພາພອນ ມົ່ງມຸງຄຸນ; ກຸກກີກ ບຸດດາໄຊ;)**

# ຍົກສູງຂີດຄວາມສາມາດໃຫ້ ສສຊ ແລະ ສສຂ



(ສພຊ) ເພື່ອໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຍົກລະດັບຄວາມຮັບຮູ້, ຄວາມເຂົ້າໃຈ ກ່ຽວກັບການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ, ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ການຕິດຕາມກວດກາວຽກງານຂອງອົງການກວດສອບໃຫ້ສູງຂຶ້ນ; ເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນແຂວງ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີປະສິດທິຜົນດີຂຶ້ນ ໃນການການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ, ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ການຕິດຕາມກວດກາວຽກງານຂອງອົງການກວດສອບ. ໃນລະຫວ່າງວັນທີ 21-22 ຕຸລາ 2023 ທີ່ເມືອງວັງວຽງ ແຂວງວຽງຈັນ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ຈັດກອງປະຊຸມຝຶກອົບຮົມການຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ກ່ຽວກັບການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ, ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ການຕິດຕາມກວດກາວຽກງານຂອງອົງການກວດສອບ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ມີບັນດາທ່ານປະທານ-ຮອງປະທານກຳມາທິການ, ຫົວໜ້າກົມ, ສູນພາຍໃນສະພາແຫ່ງຊາດ, ບັນດາທ່ານຄະນະປະທານຄະນະສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ 3 ແຂວງ ຄື: ນະຄອນຫຼວງວຽງຈັນ, ວຽງຈັນ ແລະ ບໍລິຄຳໄຊ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການສະເໜີການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍຈາກທ່ານຮອງປະທານກຳມາທິການກົດໝາຍ; ການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ ຈາກທ່ານຫົວໜ້າກົມຕິດຕາມກວດກາວຽກງານຍຸຕິທຳ ແລະ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕໍ່ກັບການເຄື່ອນໄຫວຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ຈາກທ່ານປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຜັດປ່ຽນກັນຂຶ້ນປະກອບຄຳຄິດຄຳເຫັນໃສ່ບັນດາຫົວຂໍ້ຕ່າງໆ ເພື່ອເປັນການແລກປ່ຽນຄຳຄິດຄຳເຫັນ ແລະ ບັນດາບັນຫາຕ່າງໆ ທີ່ປາກົດຂຶ້ນໃນຂອບເຂດທ້ອງຖິ່ນຂອງຕົນ ພ້ອມທັງແນວທາງໃນການປະຕິບັດຕາມຂົງເຂດດັ່ງກ່າວທີ່ໄດ້ນຳມາສະເໜີໃນຄັ້ງນີ້.

ໃນໂອກາດນີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ກ່າວປິດກອງປະຊຸມຝຶກອົບຮົມໃນຄັ້ງນີ້ວ່າ: ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ສົນທະນາ, ແລກປ່ຽນບົດຮຽນກັບວິທະຍາກອນ ເຊິ່ງຕະຫຼອດໄລຍະການດຳເນີນກອງປະຊຸມ ບັນດາຜູ້ແທນໄດ້ມີຄວາມເອົາໃຈໃສ່ໃນການຄົ້ນຄວ້າ ແລະ ສົນທະນາບົດຮຽນ ດ້ວຍຄວາມຕັ້ງໜ້າ ແລະ ວິທະຍາກອນໄດ້ເອົາໃຈໃສ່ຖ່າຍທອດບົດຮຽນ ແລະ ສົມທຽບທີ່ຫຼາກຫຼາຍ, ອຸດົມສົມບູນ ເຮັດໃຫ້ບັນດາທ່ານຜູ້ແທນມີຄວາມຮັບຮູ້, ເຂົ້າໃຈຕໍ່ບັນຫາທີ່ຍົກມາສົນທະນາ, ຄະນະຮັບຜິດຊອບ, ກອງເລຂາກອງປະຊຸມ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ມີຄວາມເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ຈຶ່ງເຮັດໃຫ້ກອງປະຊຸມຝຶກອົບຮົມໃນຄັ້ງນີ້ ໄດ້ຮັບຜົນສຳເລັດຕາມແຜນການ ແລະ ຄາດໝາຍທີ່ວາງໄວ້; ຜົນສຳເລັດຂອງກອງປະຊຸມໃນຄັ້ງນີ້ ເປັນຜົນສຳເລັດເບື້ອງຕົ້ນຂອງພວກເຮົາ; ສະນັ້ນ, ເພື່ອເຮັດລ້ອນໜ້າທີ່ການເມືອງອັນມີກຽດທີ່ປະເທດຊາດ ແລະ ປະຊາຊົນມອບໝາຍໃຫ້ ໂດຍສະເພາະໃນການຕິດຕາມກວດກາ ຂອງບັນດາອົງການອຳນາດລັດ ຕາມທີ່ກຳນົດໄວ້ໃນກົດໝາຍ ກໍຄືເພື່ອຮັບປະກັນ ການປະຕິບັດ 3 ພາລະບົດບາດ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ກໍຄືຂອງສະມາຊິກສະພາ ໃຫ້ມີຄຸນນະພາບດີຂຶ້ນເລື້ອຍໆ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ບັນດາທ່ານຈະນຳເອົາເນື້ອໃນ ແລະ ບົດຮຽນ ຈາກກອງປະຊຸມຄັ້ງນີ້ໄປຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດໃຫ້ມີຜົນເປັນຮູບປະທຳ ໃນວຽກງານຕົວຈິງ, ເປັນປະໂຫຍດສູງສຸດຢູ່ໃນການປະຕິບັດໜ້າທີ່ ແລະ ການຈັດຕັ້ງຂອງຕົນ.

**(ກຸກກີກ ບຸດດາໄຊ)**



## ຖະແຫຼງ...

(ຕໍ່ຈາກໜ້າ 1)

ກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໃນການກະກຽມເນື້ອໃນຂອງແຕ່ລະພາກສ່ວນທີ່ຈະນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດໃນຄັ້ງນີ້. ມາເຖິງປັດຈຸບັນເຫັນວ່າການກະກຽມແມ່ນຄົບຖ້ວນ, ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍແລ້ວ; ໃນວັນທີ 24 ຕຸລາ 2023 ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ວ່າ: ໃນນາມເລຂາທິການສະພາແຫ່ງຊາດ, ຫົວໜ້າກອງເລຂານຸການກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX, ຂໍຕາງໜ້າຄະນະປະຈຳສະພາແຫ່ງຊາດ ມີຄວາມຍິນດີ ແລະ ຖືເປັນກຽດແຈ້ງມາຍັງບັນດາທ່ານພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດແລະພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດຮັບຊາບ ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນອັງຄານ ກົງກັບວັນທີ 31 ຕຸລາ 2023 ແລະ ຈະດຳເນີນໄປເຖິງວັນອັງຄານ ວັນທີ 21 ພະຈິກ 2023 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫລວງວຽງຈັນ ຈະໃຊ້ເວລາດຳເນີນກອງປະຊຸມທັງໝົດ 16 ວັນ (ບໍ່ລວມເອົາວັນພັກທາງລັດຖະການ); ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

**1. ວຽກງານຂອງລັດຖະບານ**

1) ບົດລາຍງານ ໂດຍສັງເຂບຂອງທ່ານ ນາຍົກລັດຖະມົນຕີ ກ່ຽວກັບ ສະພາບການເຄື່ອນໄຫວວຽກງານພົ້ນເດັ່ນ ກາງສະໄໝ 5 ປີ (2021-2025) ແລະ ແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງລັດຖະບານ;

2) ບົດລາຍງານ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກາງສະໄໝ 5 ປີ (2021-2025) ແລະ ແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງລັດຖະບານ;

3) ບົດລາຍງານ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ກາງສະໄໝ 5 ປີ (2021-2025) ແລະ ແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງລັດຖະບານ;

4) ບົດລາຍງານ ການຈັດຕັ້ງປະຕິບັດແຜນເງິນຕາ ກາງສະໄໝ 5 ປີ (2021-2025) ແລະ ແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງລັດຖະບານ;

5) ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານ ເສດຖະກິດ-ການເງິນ ໄລຍະ 3 ປີຜ່ານມາ (2021-2023);

6) ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ (2021-2023);

7) ບົດລາຍງານ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບ ຄື: ກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

2. ວຽກງານອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ

1) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2021;

2) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022;

3. ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ

1) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສານປະຊາຊົນສູງສຸດ;

2) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງອົງການໄອຍະການປະຊາຊົນສູງສຸດ.

4. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 8 ສະບັບ ໃນນີ້:

1) ຮ່າງກົດໝາຍສ້າງໃໝ່ 2 ສະບັບ ຄື:

(1) ຮ່າງກົດໝາຍວ່າດ້ວຍ ເຂດເສດຖະກິດພິເສດ;

(2) ຮ່າງກົດໝາຍວ່າດ້ວຍ ການຮັກສາສຸຂະພາບຂັ້ນຕົ້ນ.

2) ກົດໝາຍປັບປຸງ 6 ສະບັບ ຄື:

(1) ກົດໝາຍວ່າດ້ວຍການປົ່ນປົວ;

(2) ກົດໝາຍວ່າດ້ວຍຊັບສິນທາງປັນຍາ;

(3) ກົດໝາຍວ່າດ້ວຍການບັນຊີ;

(4) ກົດໝາຍວ່າດ້ວຍລະບົບການຊຳລະ ;

(5) ກົດໝາຍວ່າດ້ວຍຜູ້ພິພາກສາ;

(6) ກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນ ຂັ້ນແຂວງ.

5. ວຽກງານສະພາແຫ່ງຊາດ.

1) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາແຫ່ງຊາດ;

1) ການປະເມີນຜົນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

6. ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ

1) ບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ ກາງສະໄໝ 5 ປີ (2021-2025) ແລະ ແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງລັດຖະບານ;

2) ບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີຜ່ານມາ (2021-2023);

3) ບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ(2021-2023);

4) ບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບ ຄື: ກົດໝາຍວ່າດ້ວຍ ການປ້ອງກັນຊາດ, ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

5) ບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2021 ຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ;

6) ບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;

7) ບົດປະກອບຄຳເຫັນຂອງຜູ້ຕາງໜ້າສູນກາງແນວລາວສ້າງຊາດ ຕໍ່ການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງສະພາແຫ່ງຊາດ.

7. ມະຕິກອງປະຊຸມສະພາແຫ່ງຊາດ ລວມມີ 18 ສະບັບ

ໃນນັ້ນ, ປະກອບມີມະຕິຮັບຮອງເອົາວຽກງານຂົງເຂດຕ່າງໆ ເຊັ່ນ:

1) ມະຕິ ຮັບຮອງເອົາບົດລາຍງານຂອງລັດຖະບານ ແລະ ວາລະແຫ່ງຊາດ ຈຳນວນ 4 ສະບັບ;

2) ມະຕິ ຮັບຮອງເອົາບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 1 ສະບັບ;

3) ມະຕິ ຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ຈຳນວນ 2 ສະບັບ;

4) ມະຕິ ຮັບຮອງເອົາບົດລາຍງານອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ຈຳນວນ 2 ສະບັບ;

5) ມະຕິ ຮັບຮອງເອົາບົດລາຍງານຂອງສະພາແຫ່ງຊາດ ຈຳນວນ 1 ສະບັບ;

6) ມະຕິ ຮັບຮອງເອົາກົດໝາຍ ຈຳນວນ 8 ສະບັບ.

ອີກເທື່ອໜຶ່ງ, ໃນນາມຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ, ຂ້າພະເຈົ້າ ຂໍເຊີນຊວນບັນ ດາທ່ານພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້, ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານຮັບຜິດຊອບໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ: ບັນດາທ່ານສາມາດສົ່ງຄຳຄິດຄຳເຫັນ ແລະ ຄຳສະເໜີໄປຍັງກອງປະຊຸມໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.
- ອີເມວ: nalao.156@gmail.com
- App: Laona



# ສະມາຊິກສະພາປະຊາຊົນແຂວງ ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງນາແລ



(ສພຊ) ຕົ້ນເດືອນຕຸລາ 2023 ຄະນະປະຈຳສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນາແລ ແຂວງຫຼວງນ້ຳທາ ນຳໂດຍທ່ານ ຄຳພອນ ເຕີ່ນຈະເລີນ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຢ້ຽມຢາມປະຊາຊົນຜູ້ມີສິດເລືອກຕັ້ງ ຢູ່ບ້ານພູຫຼວງ ແລະ ບ້ານຫາດນາແລ້ງ ເມືອງນາແລ ແຂວງຫຼວງນ້ຳທາ ມີຜູ້ເຂົ້າຮ່ວມທັງໝົດ 132 ຄົນ ຍິງ 49 ຄົນ ເພື່ອເປັນການລົງໃກ້ຊິດຕິດແທດກັບຮາກຖານ, ເກັບກຳສະພາບການເປັນຢູ່ຂອງປະຊາຊົນ ພ້ອມທັງຈັດຕັ້ງປະຕິບັດ ແລະ ຍົກສູງພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນແຂວງ ໃນການເປັນຕົວແທນແຫ່ງສິດ, ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ.

ການພົບປະໃນຄັ້ງນີ້, ໄດ້ນຳເອົາກົດໝາຍ ແລະ ບາງເອກະສານສຳຄັນໃນຂົງເຂດສະພາປະຊາຊົນແຂວງ ເຊັ່ນ: ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໂຄສະນາ, ເຜີຍແຜ່, ປຸກລະດົມພໍ່ແມ່ປະຊາຊົນ ໃຫ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມໃນການປະຕິບັດແນວທາງຂອງພັກ, ນະໂຍບາຍຂອງລັດ, ຍົກສູງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, 2 ວາລະແຫ່ງຊາດ ໃຫ້ນັບມື້ສູງຂຶ້ນ. ໃນໂອກາດດຽວກັນນີ້ ຄະນະສະມາຊິກສະພາປະຊາຊົນແຂວງ ຍັງໄດ້ຊຸກຍູ້ໃຫ້ພໍ່ແມ່ປະຊາຊົນພາຍໃນບ້ານມີຄວາມສາມັກຄີ, ຮັກແພງ, ຊ່ວຍເຫຼືອເຊິ່ງກັນແລະກັນ; ສົ່ງເສີມມູນເຊື້ອອອກແຮງງານ, ເອົາໃຈໃສ່ການປູກ-ການລ້ຽງ, ການຜະລິດເປັນສິນຄ້າ ເພື່ອສ້າງເສດຖະກິດຄອບຄົວ ຕາມທິດກຸ້ມຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

**(ທອງລຸນ ອູ່ຄຳຫຼ້າ)**

# ສ່ອງແສງວຽກງານ ລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງອຸດົມໄຊ

(ສພຊ) ເພື່ອເປັນການສ່ອງແສງລາຍງານວຽກງານໃນໄລຍະຜ່ານມາ ແລະ ເພື່ອເປັນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງຮ່ວມ ລະຫວ່າງສະພາປະຊາຊົນແຂວງອຸດົມໄຊ ກັບອົງການປົກຄອງແຂວງອຸດົມໄຊ ສະບັບເລກທີ 70/ອຊ, ລົງວັນທີ 4 ກຸມພາ 2022; ຕອນບ່າຍວັນທີ 20 ຕຸລາ 2023 ຢູ່ທີ່ຫ້ອງວ່າການແຂວງອຸດົມໄຊ ໄດ້ຈັດກອງປະຊຸມສ່ອງແສງວຽກງານຮ່ວມກັນ ນຳໂດຍທ່ານ ບຸນຄົງ ຫຼ້າຈຽມພອນ ເຈົ້າແຂວງອຸດົມໄຊ ແລະ ທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາທ່ານຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ, ຄະນະເລຂາທິການ, ພະນັກງານຂະແໜງການທີ່ກ່ຽວຂ້ອງ ແລະ ແຂກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນຂອງອົງການປົກຄອງແຂວງ ປະຈຳ 9 ເດືອນ ແລະ ທິດທາງວຽກງານຈຸດສຸມ 3 ເດືອນທ້າຍປີ 2023 ຕິດພັນວາລະເຄັ່ງຮ້ອນຂອງລັດຖະບານ, ພາຍໃຕ້ການນຳພາ-ຊີ້ນຳຂອງອົງການປົກຄອງແຂວງ ມີຫຼາຍດ້ານທີ່ພົ້ນເດັ່ນຄື: ໄດ້ສຸມໃສ່ນຳພາວຽກງານການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ຕະຫຼອດຮອດປະຊາຊົນບັນດາເຜົ່າພາຍໃນແຂວງ ໃຫ້ຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງຂອງພັກ-ລັດ, ສຸມໃສ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ, ສຸມໃສ່ຜັນຂະຫຍາຍການຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງ ແລະ ນິຕິກຳຕ່າງໆຢ່າງຕັ້ງໜ້າ, ສຸມໃສ່ວຽກງານເສດຖະກິດຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຜົນງານດ້ານອື່ນໆ. ພ້ອມນີ້, ຍັງໄດ້ຮັບຟັງການລາຍງານຫຍໍ້ ການຕິດຕາມກວດກາການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງແຂວງ ຕິດພັນກັບການແກ້ໄຂຄຳຮ້ອງຄວາມເປັນທຳຂອງພົນລະເມືອງ, ບົດສະຫຼຸບຖອດຖອນບົດຮຽນການພົບປະຜູ້ມີສິດເລືອກຕັ້ງ, ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ຜ່ານທິດທາງແຜນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II.

ຫຼັງຈາກນັ້ນ, ກອງປະຊຸມໄດ້ເປີດກ້ວາງໃຫ້ແຕ່ລະພາກສ່ວນໄດ້ປະກອບຄວາມຄິດເຫັນເຂົ້າໃນວຽກງານຕ່າງໆ ຢ່າງກົງໄປກົງມາ, ປຶກສາຫາລື, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນການການຈັດຕັ້ງປະຕິບັດວຽກງານ, ການປະສານງານ, ການສະໜອງຂໍ້ມູນ ເພື່ອຊອກເຫັນດ້ານອ່ອນຂໍ້ຄົງຄ້າງ ແລະ ເພື່ອເປັນການຫາວິທີທາງແກ້ໄຂໃນຕໍ່ບັນຫາໜ້າໃຫ້ຖືກຕ້ອງ, ສອດຄ່ອງຕາມພາລະບົດບາດ, ສິດໜ້າທີ່ ແລະ ດີຂຶ້ນກວ່າເກົ່າ.

**(ນັກຂ່າວ ສພຊ ອຸດົມໄຊ)**




# ຕິດຕາມກວດກາການປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍຂົງເຂດ ປກຊ-ປກສ

(ສພຊ) ກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ໄດ້ຈັດຂຶ້ນໃນຕົ້ນເດືອນຕຸລາ 2023 ທີ່ສະພາປະຊາຊົນແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ, ປະທານສະພາປະຊາຊົນແຂວງຄຳມ່ວນ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ພ້ອມດ້ວຍບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ,ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12, ສະມາຊິກສະພາປະຊາຊົນຂັ້ນແຂວງ, ຄະນະກອງບັນຊາການທະຫານແຂວງ, ຄະນະກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການທຽບເທົ່າພະແນກການຂອງແຂວງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.



ກອງປະຊຸມໄດ້ຮັບຟັງບົດການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບຄື: ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ) ປະກອບມີ: V ພາກ, 8 ໝວດ, 50 ມາດຕາ; ກົດໝາຍວ່າດ້ວຍການປ້ອງກັນຊາດ ມີ X ພາກ, 8 ໝວດ, 65 ມາດຕາ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ) ມີ IX ພາກ, 6 ໝວດ, 55 ມາດຕາ. ຈາກນັ້ນ, ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນ



ອ່ານຕໍ່ໜ້າ 7

# ມອບເຄື່ອງຊ່ວຍເຫຼືອ ໃຫ້ຄອບຄົວທີ່ໄດ້ຮັບຜົນເສຍຫາຍຈາກອັກຄີໄພ

(ສພຊ) ໃນຕອນບ່າຍຂອງວັນທີ 20 ຕຸລາ 2023 ທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງສາລະວັນ ສົມທົບກັບສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງສາລະວັນ ແລະ ອົງການກາແດງແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຕິດຕາມຢ້ຽມຢາມໃຫ້ກຳລັງໃຈ ແລະ ມອບເຄື່ອງຊ່ວຍເຫຼືອ ເພື່ອແບ່ງເບົາບັນເທົາທຸກໃຫ້ແກ່ຜູ້ປະສົບອັກຄີໄພໄຟໄໝ້.

ເຮືອນທີ່ໄດ້ຮັບການຊ່ວຍເຫຼືອແມ່ນເຮືອນຂອງຄອບຄົວ ທ້າວ ພອນ ອາຍຸ 68 ປີເຊິ່ງເຫດການໄຟໄໝ້ເກີດຂຶ້ນເວລາ 7:30 ເຊົ້າ ຂອງວັນທີ 17 ຕຸລາ 2023 ຢູ່ທີ່ບ້ານສອງກະລອງ ເມືອງສາລະວັນ ແຂວງສາລະວັນ ໄດ້ຮັບຄວາມເສຍຫາຍໝົດຫຼັງ ລວມເປັນມູນຄ່າເກືອບ 400 ລ້ານກີບ, ສາເຫດທີ່ພາໃຫ້ເກີດໄຟໄໝ້ເກີດຈາກໄຟຟ້າລັດວົງຈອນ ໂຊກດີບໍ່ມີຜູ້ໄດ້ຮັບບາດເຈັບ ຫຼື ເສຍຊີວິດ.

ດ້ວຍຄວາມເປັນຫ່ວງເປັນໄຍຂອງພັກ-ລັດ, ອົງການການປົກຄອງຂອງແຂວງ ຈຶ່ງໄດ້ນຳເອົາວັດຖຸສິ່ງຂອງປະເພດເຄື່ອງອຸປະໂພກໃຊ້ໃນຄົວເຮືອນຈຳນວນໜຶ່ງ ມູນຄ່າ 4 ລ້ານກີບຊ່ວຍເຫຼືອມອບໃຫ້ຄອບຄົວຜູ້ປະສົບອັກຄີໄພ ເພື່ອນຳໃຊ້ເຂົ້າໃນການດຳລົງຊີວິດປະຈຳວັນ, ພ້ອມດຽວກັນກໍໄດ້ຮັບຟັງການໂອ້ລົມໃຫ້ກຳລັງໃຈໃຫ້ຄອບຄົວຜູ້ປະສົບອັກຄີໄພໃຫ້ສູ້ຊົນດຳເນີນຊີວິດເປັນປົກກະຕິ ພ້ອມທັງມີສະຕິເຝົ້າລະວັງກວດເຊັກອຸປະກອນໄຟຟ້າ ເພື່ອບໍ່ໃຫ້ເກີດເຫດການຂຶ້ນອີກ.

**(ດີລຳພົນ ພົມມະຈັນ)**



# ສພຂ ບໍ່ແກ້ວ ເຊື່ອມຊຶມເອກະສານສຳຄັນຂອງພັກ-ລັດ ໃຫ້ແກ່ພະນັກງານ-ລັດຖະກອນ




(ສພຊ) ສະພາປະຊາຊົນແຂວງບໍ່ແກ້ວ ໄດ້ຈັດກອງປະຊຸມເຊື່ອມຊຶມເອກະສານຂອງສຳຄັນຂອງພັກ-ລັດ ເພື່ອກະກຽມໃຫ້ແກ່ການດຳເນີນຊີວິດການເມືອງ, ຕີລາຄາຈັດແບ່ງປະເພດສະມາຊິກພັກ, ໜ່ວຍພັກ ແລະ ຕີລາຄາປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນປະຈຳປີ 2023 ໂດຍການເຜີຍແຜ່ເອກະສານຮ່ວມຂອງຄະນະປະຈຳສະພາປະຊາຊົນແຂວງເຜີຍແຜ່ໂດຍສະຫາຍ ນາງ ດາວ ໄຊເສດຖາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ສະຫາຍ ສາຍຄຳ ຄຳປະເສີດ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຫາຍ ນາງ ອຳພອນ ບຸນຍາວົງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ສະຫາຍ ບຸນເພັດ ແກ້ວດວງດີ ຮອງປະທານຄະນະກຳມາການເສດຖະກິດ, ແຜນການ ແລະ ການເງິນ ແລະ ສະຫາຍ ສົມບຸນ ໄຍສະຫວັນ ຮອງເລຂາທິການສະພາປະຊາຊົນແຂວງ; ມີບັນດາສະຫາຍແຂກຖືກເຊີນຈາກຄະນະຈັດຕັ້ງແຂວງ, ຄະນະກວດກາພັກ-ລັດແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ເອກະສານທີ່ນຳມາເຜີຍແຜ່ຄັ້ງນີ້, ປະກອບມີ 16 ເອກະສານຄື: ຄຳແນະນຳຂອງຄະນະຈັດຕັ້ງແຂວງ ສະບັບເລກທີ 1189/ຄຈຂ, ລົງວັນທີ 2/10/2023 ວ່າດ້ວຍການປະຕິບັດຄຳສັ່ງຂອງຄະນະປະຈຳພັກແຂວງ ກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກໃນທົ່ວແຂວງບໍ່ແກ້ວ; ເນື້ອໃນເອກະສານຂໍ້ກຳນົດສະບັບເລກທີ 03/ກມສພ, ລົງວັນທີ 26 ມິຖຸນາ 2012 ວ່າດ້ວຍຄວາມຮັບຜິດຊອບຂອງພະນັກງານນຳພາ-ຄຸ້ມຄອງຕໍ່ການປະຕິບັດໜ້າທີ່ການເມືອງ; ກົດລະບຽບຂອງພັກສະໄໝທີ IX (ບາງມາດຕາເຊັ່ນ: ມາດຕາ 4,5 ແລະ 6); ບົດແນະນຳຂອງຄະນະກວດກາພັກແຂວງ ສະບັບເລກທີ 136/ຄກພຂ, ລົງວັນທີ 3 ຕຸລາ 2023ກ່ຽວກັບການຂຽນບົດສຳຫຼວດກວດກາການນຳພາລວມຂອງຄະນະພັກ, ຕິດພັນກັບການຕີລາຄາ, ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນທົ່ວແຂວງບໍ່ແກ້ວ ປະຈຳປີ 2023; ເອກະສານ 18 ຄຳຖາມ-18 ຄຳຕອບ (ຂອງເນື້ອໃນກອງປະຊຸມຄົບຄະນະ ກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ I; ຄຳສັ່ງຂອງຄະນະເລຂາທິການສູນກາງພັກສະບັບເລກທີ 411/ຄລສພ, ລົງວັນທີ 8 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ບົດແນະນຳຂອງຄະນະຈັດຕັ້ງແຂວງ ສະບັບເລກທີ 1133/ຄຈຂ, ລົງວັນທີ 13 ກັນຍາ 2023 ວ່າດ້ວຍການດຳເນີນຊີວິດການເມືອງຕີລາຄາຄຸນນະພາບ, ຈັດແຕ່ງປະເພດສະມາຊິກພັກ ແລະ ໜ່ວຍພັກທົ່ວແຂວງບໍ່ແກ້ວ ປະຈຳປີ 2023; ຄຳສັ່ງຂອງຄະນະປະຈຳພັກແຂວງສະບັບເລກທີ 1331/ຄປພຂ, ລົງວັນທີ 12 ກັນຍາ 2023 ກ່ຽວກັບການກະກຽມ ແລະ ການດຳເດີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ມະຕິກອງປະຊຸມວຽກງານການເມືອງ-ແນວຄິດທົ່ວແຂວງບໍ່ແກ້ວ ຄັ້ງທີ I; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກວ່າດ້ວຍການກະກຽມ ແລະ ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ຄຳແນະນຳຂອງຄະນະສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ຄຳແນະນຳຂອງຄະນະກວດກາສູນກາງພັກ ສະບັບເລກທີ 285/ຄກສພ, ລົງວັນທີ 15 ກັນຍາ 2023 ວ່າດ້ວຍການກະກຽມ ແລະ ການດຳເນີນຊີວິດການເມືອງທ້າຍສະໄໝກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງບໍ່ແກ້ວ ຄັ້ງທີ 12 ສະໄໝທີ VI, ເລກທີ 123/ຄປຂ; ກົດໝາຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2005 (ບັນດາຂໍ້ຫ້າມ); ດຳລັດຂອງລັດຖະບານສະບັບເລກທີ 300/ລບ, ລົງວັນທີ 13 ກັນຍາ 2017 ວ່າດ້ວຍການປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ; ດຳລັດຂອງລັດຖະບານສະບັບເລກທີ 116/ລບ, ລົງວັນທີ 2 ເມສາ 2019 ວ່າດ້ວຍການແຂ່ງຂັນຍ້ອງຍໍ; ຄຳແນະນຳຂອງທ່ານເຈົ້າແຂວງ ສະບັບເລກທີ 860/ຈຂ.ບກ, ລົງວັນທີ 10 ຕຸລາ 2022 ກ່ຽວກັບເງື່ອນໄຂມາດຖານການຄັດເລືອກຜົນງານປະຈຳປີຂອງບຸກຄົນ, ກົມກອງລວມໝູ່ ແລະ ບ້ານ ທີ່ມີຜົນງານດີເດັ່ນເພື່ອຍ້ອງຍໍສົມລະເສີນຂັ້ນແຂວງ. ທັງນີ້, ກໍເພື່ອໃຫ້ພະນັກງານສະມາຊິກພັກ, ພະນັກງານ-ລັດຖະກອນໄດ້ຮັບຮູ້, ເຂົ້າໃຈຕໍ່ເນື້ອໃນເອກະສານ ແລະ ເພື່ອຕີລາຄາໝາກຜົນຂອງການນຳພາລວມຂອງຄະນະພັກ, ຂອງພະນັກງານສະມາຊິກພັກ, ພະນັກງານ-ລັດຖະກອນ ກໍຄືການຈັດຕັ້ງປະຕິບັດໜ້າທີ່ການເມືອງທີ່ຖືກມອບໝາຍຂອງບຸກຄົນຮັບຜິດຊອບ,ທັງເປັນການປັບປຸງປົວແປງພາຍໃນພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ທັງຮັບປະກັນການກໍ່ສ້າງພັກ ຕາມ 5 ຫຼັກການ 3 ທິດນຳຂອງພັກ ໃຫ້ຖືກຕ້ອງຕາມລະບຽບຂອງພັກ.



**(ນາງ ຂັນຖະໜອມ ແກ້ວມະນີ)**

# ປະເມີນການຈັດຕັ້ງປະຕິບັດກົດໝາຍ 3 ສະບັບ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

(ສພຊ) ກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ 3 ສະບັບ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຈັດຂຶ້ນໃນທ້າຍເດືອນກັນຍາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອັດຕະປື ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື, ປະທານສະພາປະຊາຊົນແຂວງອັດຕະປື, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.



ໂດຍປະຕິບັດຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ແລະ ຄຳແນະນຳຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສະພາແຫ່ງຊາດ ເພື່ອຄວາມເປັນເອກະພາບໃນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 3 ສະບັບ, ກອງປະຊຸມຈະໄດ້ຕີລາຄາຄືນ ແລະ ປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ, ເພື່ອໃຫ້ເຫັນໄດ້ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ, ຫຼັກການ, ຂັ້ນຕອນ ແລະ ວິທີທາງແກ້ໄຂ. ພ້ອມກັນນີ້, ຜູ້ເຂົ້າຮ່ວມຈະໄດ້ພ້ອມກັນຄົ້ນຄວ້າ, ວິເຄາະ, ວິໄຈບັນຫາ ແລະ ແລກປ່ຽນຄວາມຄິດຄວາມເຫັນຕໍ່ເນື້ອໃນຂອງກົດໝາຍທີ່ນຳມາປະເມີນຢ່າງເລິກເຊິ່ງ ດ້ວຍເຫດຜົນ ແລະ ບົນພື້ນຖານຄວາມເປັນຈິງ ເພື່ອເຮັດໃຫ້ບັນດາເນື້ອໃນຂອງກົດໝາຍມີຄວາມຫຼາກຫຼາຍ, ລະອຽດ, ຈະແຈ້ງ ແລະ ສອດຄອງກັບສະພາບຄວາມເປັນຈິງ ແລະ ສາມາດເປັນຂໍ້ມູນພື້ນຖານສຳຄັນລາຍງານຕໍ່ສະພາແຫ່ງຊາດ ປະກອບເຂົ້າໃນແຜນການສ້າງ ແລະ ປັບປຸງກົດໝາຍ ຢ່າງມີປະສິດທິຜົນ.

**(ວິນັດ)**




# ສສຊ ເຂດ 7 ປະຕິບັດພາລະບົດຕິດຕາມກວດກາ

(ສພຊ) ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມ ປະຈຳປີ 2023 ຂອງຄະນະ ສສຊ ແລະ ມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຊຸດທີ II ຢູ່ທີ່ເມືອງເງິນ ແຂວງໄຊຍະບູລີ ໃນວັນທີ 13 ຕຸລາ ຜ່ານມາ ນຳໂດຍທ່ານ ນາງ ວັນນາ ພິມວິສອນ ສສຊ ປະຈຳເຂດເລືອກຕັ້ງ, ເລຂາທິການສະພາປະຊາຊົນແຂວງໄຊຍະບູລີ ພ້ອມດ້ວຍຄະນະ; ໃຫ້ການຕ້ອນຮັບໂດຍທ່ານ ທອງພັນ ສຸກສະຫວັດ ຮອງເຈົ້າເມືອງເງິນ, ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການຂົງເຂດເສດຖະກິດ, ແຜນການ ແລະ ການເງິນ, ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຂົງເຂດຍຸຕິທຳ ແລະ ປກຊ-ປກສ ພ້ອມດ້ວຍພະນັກງານ-ວິຊາການ ທີ່ຊ່ວຍວຽກສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ເຂົ້າຮ່ວມຢ່າງພ້ອມພຽງ.



ໃນໂອກາດນີ້, ທ່ານ ທອງພັນ ສຸກສະຫວັດ ໄດ້ລາຍງານຫຍໍ້ກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມຢູ່ພາຍໃນເມືອງ ໂດຍໄດ້ຍົກໃຫ້ເຫັນການຈັດຕັ້ງປະຕິບັດວຽກງານແຕ່ລະຂົງເຂດຢູ່ພາຍໃນເມືອງ ແລະ ໃນໄລຍະ 9 ເດືອນຜ່ານມາ ໂດຍລວມແລ້ວເມືອງເງິນແມ່ນສາມາດຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມຍັງສືບຕໍ່ມີຄວາມສະຫງົບປອດໄພໂດຍພື້ນຖານເສດຖະກິດ ກໍໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ທັງໄດ້ຮັບການຈັດຕັ້ງປະຕິບັດໄດ້ມີຜົນສຳເລັດຕາມຄາດໝາຍ ແລະ ຮັບຟັງການລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດມະຕິສະບັບເລກທີ 26/ຄປຈ.ຊຍ, ລົງວັນທີ 23/5/2022 (ມີດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ). ຫຼັງຈາກນັ້ນ, ບັນດາຜູ້ເຂົ້າຮ່ວມຍັງໄດ້ປະກອບຄຳຄິດເຫັນ ແລະ ສະເໜີຕໍ່ສະພາປະຊາຊົນແຂວງ ເພື່ອເປັນບ່ອນອີງໃນການປັບປຸງແກ້ໄຂບັນຫາຄົງຄ້າງ ໃຫ້ໄດ້ຮັບການຄົ້ນຄວ້າພິຈາລະນາ ແລະ ຮັບຮອງ, ເພື່ອສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າເຮັດໃຫ້ເມືອງເງິນ ໄດ້ຮັບການພັດທະນາດີຂຶ້ນ ແລະ ໃນໂອກາດນີ້, ຄະນະທີມງານດັ່ງກ່າວຍັງໄດ້ໄປຢ້ຽມຢາມພື້ນທີ່ການຜະລິດຕົວຈິງຂອງເມືອງຕື່ມອີກ.

(ອິນທີ ຂຽວສີຟ້າ)

# ຕີລາຄາການກະກຽມດຳເນີນກອງປະຊຸມສະໄຫມສາມັນເທື່ອທີ 5 ແລະ ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ



(ສພຊ) ສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການກະກຽມດຳເນີນກອງປະຊຸມ ແລະ ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ, ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເມື່ອທ້າຍກັນຍາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີຮອງປະທານ, ບັນດາທ່ານໃນຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຮ່າງບົດສະຫຼຸບຕີລາຄາການກະກຽມດຳເນີນກອງປະຊຸມ, ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄຫມສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ສະພາແຫ່ງຊາດ ຊຸດທີ IX ເຊິ່ງບົດສະຫຼຸບດັ່ງກ່າວ ໄດ້ສະແດງອອກຄື: ດ້ານເນື້ອໃນແມ່ນໄດ້ເອົາໃຈໃສ່ໃນການປະສານງານກັບອົງການປົກຄອງແຂວງ, ບັນດາພະແນກການ, ອົງການກ່ຽວຂ້ອງເຫັນວ່າເຮັດໄດ້ດີ ແລະ ສາມາດນຳເອົາບົດລາຍງານເຂົ້າຜ່ານໃນກອງປະຊຸມ ເພື່ອໃຫ້ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນຕ່າງໆ ໃນກອງປະຊຸມໄດ້ຕາມຄາດໝາຍ; ດ້ານບໍລິຫານ-ການເງິນ ແລະ ພິທີການ ໄດ້ອຳນວຍຄວາມສະດວກ, ເຮັດສຳເລັດຕາມທິດຊີ້ນຳຂອງຄະນະປະທານເປັນຢ່າງດີ ຈຶ່ງເຮັດໃຫ້ສາມາດດຳເນີນ ແລະ ປິດກອງປະຊຸມດ້ວຍຜົນສຳເລັດຢ່າງຈົບງາມ ໃນລະຫວ່າງວັນທີ 3-4 ສິງຫາ 2023, ມີຜູ້ເຂົ້າຮ່ວມທັງໝົດ 193 ທ່ານ ຍິງ 43 ທ່ານ. ພ້ອມນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ສຳເລັດໃນການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງ 2 ກອງປະຊຸມດັ່ງກ່າວໄດ້ 92 ຈຸດ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 7.390 ຄົນ ຍິງ 3.069 ຄົນ ແລະ ຜົນສຳເລັດດ້ານອື່ນໆຕື່ມອີກ.

ສຳລັບດ້ານອ່ອນ-ຂໍ້ຄົງຄ້າງ ໃນການກະກຽມດຳເນີນກອງປະຊຸມ ກໍຍັງມີຈຳນວນໜຶ່ງເປັນຕົ້ນແມ່ນການປະສານງານກັບອົງການປົກຄອງແຂວງ, ບັນດາພະແນກການ, ອົງການຍັງບໍ່ທັນກົມກຽວເທົ່າທີ່ຄວນ ເຊິ່ງສະແດງອອກໃນການສົ່ງບົດລາຍງານໃຫ້ທາງສະພາປະຊາຊົນແຂວງຍັງຊັກຊ້າ ແລະ ການປະສານງານກັບເມືອງ, ບັນດາບ້ານ ທີ່ຈະລົງພົບປະຍັງບໍ່ທັນເຮັດໄດ້ດີ ສະແດງອອກຜູ້ເຂົ້າຮ່ວມຮັບຟັງບາງບ້ານຍັງມີຈຳນວນໜ້ອຍ ແລະ ບັນຫາອື່ນໆ.

ຫຼັງຈາກນັ້ນ, ກອງປະຊຸມໄດ້ເປີດກວ້າງໃຫ້ຜູ້ເຂົ້າຮ່ວມປະກອບຄຳຄິດຄຳເຫັນ, ແລກປ່ຽນເຊິ່ງກັນແລະກັນຢ່າງກົງໄປກົງມາ, ເປັນການສະຫຼຸບຕີລາຄາຄືນການກະກຽມດຳເນີນກອງປະຊຸມ ແລະ ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ, ເພື່ອກຳໄດ້ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ເພື່ອເປັນການຊອກຫາວິທີທາງແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ, ເອົາເປັນບົດຮຽນໃຫ້ແກ່ການກະກຽມດຳເນີນກອງປະຊຸມ, ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມໃນຕໍ່ໜ້າ.

ປະທານກອງປະຊຸມໄດ້ມີຄຳເຫັນ, ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄະນະນຳ ແລະ ພະນັກງານທຸກທ່ານທີ່ໄດ້ສຸມໃສ່ໃນການກະກຽມເນື້ອໃນດ້ານຕ່າງໆ ເຮັດໃຫ້ການດຳເນີນກອງປະຊຸມ ແລະ ພົບປະປະຊາຊົນສຳເລັດຜົນຕາມລະດັບຄາດໝາຍ ແລະ ໄດ້ເນັ້ນໜັກໃຫ້ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເອົາໃຈໃສ່ໃນການປະສານສົມທົບກັບບັນດາພະແນກການ, ອົງການ ແລະ ບັນດາເມືອງ ໃຫ້ລະອຽດ, ວ່ອງໄວກວ່າເກົ່າ ເພື່ອເຮັດໃຫ້ການກະກຽມດຳເນີນກອງປະຊຸມ, ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ໃຫ້ໄດ້ຮັບຜົນດີຂຶ້ນກວ່າເກົ່າ ແລະ ທັນຕາມກຳນົດເວລາ.

**(ນັກຂ່າວ ສພຂ ອຸດົມໄຊ)**

# ສສຊ-ສສຂ ອັດຕະປື ພົບປະຜູ້ມີສິດເລືອກຕັ້ງຢູ່ບ້ານໜອງຟ້າໃໝ່



(ສພຊ) ໂດຍປະຕິບັດຕາມແຜນການໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ອັດຕະປື ຊຸດທີ II ໃນບັນດາຈຸດເປົ້າໝາຍທົ່ວແຂວງອັດຕະປື; ໃນວັນທີ 17 ຕຸລາ 2023 ທ່ານ ສຸກສຳລານ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ແລະ ທ່ານ ບຸນເນັ້ມ ໄຊຍະເສັ້ມ ຫົວໜ້າໜ່ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງຊານໄຊ ແຂວງອັດຕະປື ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະກັບຜູ້ມີສິດເລືອກຕັ້ງຢູ່ບ້ານໜອງຟ້າໃໝ່ ເມືອງຊານໄຊ ແຂວງອັດຕະປື; ເຂົ້າຮ່ວມມີການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງເຂົ້າຮ່ວມຮັບຟັງ 30 ກວ່າຄົນ.

ໂອກາດດັ່ງກ່າວ, ທ່ານ ບົວລຳ ແກ້ວມະນີຍົກ ນາຍບ້ານໜອງຟ້າໃໝ່ ໄດ້ລາຍງານສະພາບລວມໂດຍຫຍໍ້ຂອງບ້ານໃຫ້ຊາບວ່າ: ບ້ານໜອງຟ້າໃໝ່ ຕັ້ງຢູ່ເນີນສູງ (ເຂດວັງຕັດ), ປະກອບມີ 87 ຫຼັງຄາເຮືອນ, ມີ 110 ຄອບຄົວ, ພົນລະເມືອງທັງໝົດ 634 ຄົນ ຍິງ 321 ຄົນ, ຍຶດຖືອາຊີບເຮັດໄຮ່ເປັນສ່ວນໃຫຍ່; ພ້ອມນັ້ນ, ນາຍບ້ານ ແລະ ປະຊາຊົນ ໄດ້ສະເໜີຕໍ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ທີ່ພົວພັນເຖິງການພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນແມ່ນພື້ນຖານໂຄງລ່າງເສັ້ນທາງ, ໄຟຟ້າ, ນ້ຳໃຊ້ (ນ້ຳລິນ), ດ້ານສາທາລະນະສຸກ, ດ້ານກະສິກຳ ແລະ ບັນຫາອື່ນໆອີກ.

ຈາກນັ້ນ, ສສຊ ແລະ ສສຂ ໄດ້ຜັດປ່ຽນກັນຍົກເອົາບາງເນື້ອໃນຂອງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ແລະ ໄດ້ຍົກໃຫ້ເຫັນສະພາບການຂອງໂລກ ແລະ ສະພາບການຫຍຸ້ງຍາກຂອງປະເທດ ເປັນຕົ້ນແມ່ນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນທີ່ນອນໃນວາລະແຫ່ງຊາດ, ໂຄງການລົງທຶນ, ບັນຫາເງິນເຟີ້, ການຈ້າງງານ ແລະ ໄດ້ສະເໜີໃຫ້ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ສືບຕໍ່ຍຶດໝັ້ນຕໍ່ການນຳພາຂອງພັກ-ລັດ, ຮັກສາມູນເຊື້ອທີ່ຍາດມາໄດ້ໃນທ່າມກາງສະພາບການຫຍຸ້ງຍາກທາງດ້ານເສດຖະກິດ ໃຫ້ສ້າງເງື່ອນໄຂເສດຖະກິດຄອບຄົວປູກຝັງ, ລ້ຽງສັດ ກຸ້ມຕົນເອງເປັນເຈົ້າຕົນເອງ; ໃຫ້ເອົາໃຈໃສ່ປຸກລະດົມປູກຝັງຈິດສຳນຶກສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາ ແລະ ຄຳສະເໜີຂອງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ບາງບັນຫາຈະນຳໄປຄົ້ນຄວ້າພິຈະລະນາຕາມຂັ້ນຕອນ.



**(ວິນັດ)**

## ຕິດຕາມກອດກາ...

(ຕໍ່ຈາກໜ້າ 5)

ຄົ້ນຄວ້າ, ແລກປ່ຽນປະກອບຄຳຄິດເຫັນຕໍ່ບົດປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດ ປກຊ-ປກສ ດັ່ງກ່າວຢ່າງມີຈຸດສຸມເພື່ອເຮັດໃຫ້ເນື້ອໃນຂອງບົດປະເມີນກົດໝາຍມີເນື້ອໃນຖືກຕ້ອງສອດຄ່ອງຕາມສະພາບຄວາມເປັນຈິງ.

ໂອກາດດັ່ງກ່າວ, ທ່ານ ບຸນມີ ພິມມະສອນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ໄດ້ຕີລາຄາສູງຕໍ່ກອງປະຊຸມ ເຖິງວ່າກອງປະຊຸມຈະໄດ້ດຳເນີນເປັນພຽງເວລາ 1 ວັນເຕັມກໍຕາມ ບັນດາທ່ານ ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12, ສະມາຊິກສະພາປະຊາຊົນຂັ້ນແຂວງ, ກຳລັງ ປກຊ - ປກສ ແຂວງ ແລະ ແຂກຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນເອົາໃຈໃສ່ຄົ້ນຄວ້າ ແລະ ປະກອບຄຳຄິດເຫັນການຕໍ່ບົດປະເມີນການຈັດຕັ້ງປະຕິບັດກົດໝາຍ 3 ສະບັບ ຄັ້ງນີ້ ເພື່ອເຮັດໃຫ້ມີເນື້ອໃນສົມບູນ ແລະ ສອດຄ່ອງກັບສະພາບຕົວຈິງ, ບັນດາຄຳຄິດ-ຄຳຄິດເຫັນຂອງຜູ້ແທນແມ່ນຈະໄດ້ສັງລວມລາຍງານຕໍ່ຄະນະຮັບຜິດຊອບປະເມີນກົດໝາຍ ສະພາແຫ່ງຊາດ ສືບຕໍ່ຄົ້ນຄວ້າປັບປຸງເຂົ້າໃສ່ກົດໝາຍ ເພື່ອໃຫ້ສາມາດນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX. ຈາກນັ້ນ, ທ່ານຍັງໄດ້ກ່າວວ່າ: ກົດໝາຍດັ່ງກ່າວນັ້ນ ຈະກາຍເປັນເຄື່ອງມືທີ່ສຳຄັນ ໃນການປະຕິບັດສິດ ແລະ ໜ້າທີ່ຂອງກຳລັງ ປກຊ-ປກສ ໃນທົ່ວປະເທດ ກໍຄືຂອງແຂວງ ໃຫ້ມີຄຸນນະພາບສູງຂຶ້ນໃນການປະກອບສ່ວນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຮັດໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ ຮັບປະກັນ, ເສດຖະກິດ-ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ ຈະມີຄວາມສັກສິດນັບມື້ນັບສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**(ເອື້ອ ມະໂນສິງ)**

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON
ວັນທີ 25-31/10/2023





# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

4. ເຂື່ອນທີ່ມີຄວາມສ່ຽງຕໍ່າ ໃຫ້ດຳເນີນພາຍຫຼັງເກີດເຫດການໄພພິບັດໃດໜຶ່ງທີ່ຮ້າຍແຮງ.

ເນື້ອໃນການກວດສອບ ແລະ ການກວດກາ ແຕ່ລະປະເພດ ໃຫ້ປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 52 ການກວດກາຄຸນນະພາບຂອງເຂື່ອນ ກ່ອນມອບໂອນໃຫ້ລັດຖະບານ**

ຜູ້ພັດທະນາເຂື່ອນ ຕ້ອງດຳເນີນການກວດກາຄຸນນະພາບຂອງເຂື່ອນ ເພື່ອປະເມີນສະພາບຄວາມເປັນຈິງຂອງເຂື່ອນ ແລະ ບຳລຸງຮັກສາສ້ອມແປງໃຫ້ຢູ່ໃນສະພາບການດຳເນີນງານທີ່ດີຕາມການອອກແບບ ກ່ອນມອບໂອນໃຫ້ລັດຖະບານ.

ຜູ້ພັດທະນາເຂື່ອນ ຕ້ອງຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ໃນການຄັດເລືອກທີ່ປຶກສາເອກະລາດ ເພື່ອດຳເນີນການກວດກາ ແລະ ຢັ້ງຢືນ ຄຸນນະພາບຂອງເຂື່ອນ. ສຳລັບຄ່າໃຊ້ຈ່າຍໃຫ້ແກ່ທີ່ປຶກສາເອກະລາດໃນການກວດກາ ແລະ ຢັ້ງຢືນຄຸນນະພາບຂອງເຂື່ອນ ໃຫ້ເປັນຄວາມຮັບຜິດຊອບຂອງຜູ້ພັດທະນາເຂື່ອນ.

ຂັ້ນຕອນ ແລະ ວິທີການກວດກາຄຸນນະພາບຂອງເຂື່ອນກ່ອນມອບໂອນໃຫ້ລັດຖະບານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ພາກທີ VI
### ສິດ ແລະ ພັນທະຂອງຜູ້ພັດທະນາເຂື່ອນ ແລະ ຜູ້ໄດ້ຮັບຜົນກະທົບ

**ມາດຕາ 53 ສິດຂອງຜູ້ພັດທະນາເຂື່ອນ**

ຜູ້ພັດທະນາເຂື່ອນ ມີສິດ ດັ່ງນີ້:

1. ໄດ້ຮັບການປົກປ້ອງ ສິດ ແລະ ຜົນປະໂຫຍດ ຕາມກົດໝາຍ ແລະ ສັນຍາທີ່ໄດ້ເຊັນກັນ;
2. ພັດທະນາເຂື່ອນ ຕາມການອະນຸຍາດຂອງລັດຖະບານ;
3. ສະເໜີ ຫຼື ຮ້ອງຟ້ອງຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ ໃນກໍລະນີມີຂໍ້ຂັດແຍ່ງ ເພື່ອພິຈາລະນາແກ້ໄຂ;
4. ໄດ້ຮັບຄຳແນະນຳດ້ານເຕັກນິກວິຊາການ ແລະ ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ, ມາດຕະຖານກ່ຽວກັບການອອກແບບ, ການກໍ່ສ້າງ, ການດຳເນີນງານ ແລະ ການບຳລຸງຮັກສາ ລວມທັງຄວາມປອດໄພຂອງເຂື່ອນ;
5. ຊີ້ແຈງຜົນການກວດສອບ, ກວດກາ ແລະ ປະເມີນຜົນຄວາມປອດໄພຂອງເຂື່ອນ ໃຫ້ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
6. ໄດ້ຮັບການຮ່ວມມື ກ່ຽວກັບການພັດທະນາ, ການຄຸ້ມຄອງ, ການຕິດຕາມ, ການກວດສອບ ແລະ ການກວດກາ ຄວາມປອດໄພຂອງເຂື່ອນຂອງຕົນ;
7. ມອບໂອນຊັບສິນໂຄງການ, ສິ່ງປະກອບສ້າງ ແລະ ເອກະສານທັງໝົດຂອງໂຄງການ ຕາມການສະເໜີ ແລະ ຕາມການເຫັນດີຂອງລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງພາຍຫຼັງໂຄງການໝົດອາຍຸການສຳປະທານ;
8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 ພັນທະຂອງຜູ້ພັດທະນາເຂື່ອນ**

ຜູ້ພັດທະນາເຂື່ອນ ມີພັນທະ ດັ່ງນີ້:

1. ປະຕິບັດຕາມກົດໝາຍ, ມາດຕະຖານເຕັກນິກຂອງເຂື່ອນ, ລະບຽບການຄວາມປອດໄພຂອງເຂື່ອນໃນການສຶກສາ, ການອອກແບບ, ການກໍ່ສ້າງ, ການດຳເນີນງານ ແລະ ການບຳລຸງຮັກສາ ຢ່າງເຂັ້ມງວດ;
2. ຊົດເຊີຍຜົນກະທົບ ກ່ອນການລົງມືກໍ່ສ້າງ ແລະ ຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບ;
3. ສ້າງຄູ່ມື ການກວດສອບ, ການກວດກາ, ການທົດສອບ, ການທົດລອງ, ແຜນການໃນການດຳເນີນງານ, ແຜນການບຳລຸງຮັກສາໂຄງການ ໃຫ້ມີຄວາມປອດໄພ;
4. ດຳເນີນງານເຂື່ອນ ໃຫ້ມີຄວາມປອດໄພ ແລະ ເມື່ອມີຄວາມຜິດພາດໃດໜຶ່ງເກີດຂຶ້ນ ກໍຕ້ອງສ້ອມແປງ ແລະ ແກ້ໄຂຢ່າງທັນການ;
5. ມີປະກັນໄພຕາມສັນຍາໃນໄລຍະການພັດທະນາເຂື່ອນ ແລະ ມີການປະກັນສັງຄົມໃຫ້ແກ່ພະນັກງານຢ່າງຄົບຖ້ວນ ຕາມກົດໝາຍ;
6. ກໍ່ສ້າງ, ດຳເນີນງານ ແລະ ບຳລຸງຮັກສາ ໃຫ້ຖືກຕ້ອງຕາມລະບຽບການ ແລະ ມາດຕະຖານເຕັກນິກ ເພື່ອປ້ອງກັນຄວາມເສຍຫາຍ, ຄວາມບໍ່ປອດໄພຕໍ່ສາທາລະນະ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ເສດຖະກິດ;
7. ວາງມາດຕະການດ້ານຄວາມປອດໄພຂອງເຂື່ອນ ກ່ຽວກັບຄວາມສ່ຽງດ້ານທໍລະນີວິທະຍາ,ຄວາມແຮງຂອງແຜ່ນດິນໄຫວ, ໄພນໍ້າຖ້ວມ ແລະ ເຫດການອື່ນທີ່ອາດມີຜົນກະທົບຕໍ່ໂຄງສ້າງ ແລະ ສິ່ງປະກອບອື່ນຂອງເຂື່ອນ;
8. ຮັບຜິດຊອບປະຕິບັດຕາມແຜນຮັບມືສຸກເສີນຕະຫຼອດອາຍຸການໃຊ້ງານຂອງເຂື່ອນ;

ອ່ານຕໍ່ສະບັບໜ້າ

## ສຳເລັດ...

(ຕໍ່ຈາກໜ້າ 1)

ຄະນະ; ຄະນະຜູ້ແທນຂອງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ນຳໂດຍທ່ານ ຫວູ ຮາຍ ຮ່າ ກຳມະການຄະນະປະຈຳ, ປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ໂດຍມີຈຸດປະສົງເພື່ອສົມທົບກັນລົງຕິດຕາມກວດກາການຈັດປະຕິບັດບັນດາສົນທິສັນຍາ ແລະ ສັນຍາສາກົນ, ແຜນປະຕິບັດງານ ແລະ ການດຳເນີນໂຄງການຮ່ວມມື ແລະ ລົງທຶນຂອງລັດຖະບານຂອງສາມປະເທດ ກໍຄືໂຄງການຊ່ວຍເຫຼືອຂອງຕ່າງປະເທດຢູ່ໃນເຂດ 3 ຫຼ່ຽມພັດທະນາ ກຳປູເຈຍ-ລາວ-ຫວຽດນາມ, ຕິດຕາມກວດກາ, ຢ້ຽມຢາມໂຄງການ ແລະ ການລົງທຶນໃສ່ການພັດທະນາພື້ນຖານໂຄງລ່າງທາງດ້ານເສດຖະກິດ, ວັດທະນະທຳ, ການສຶກສາ ແລະ ທ່ອງທ່ຽວ ຈຳນວນໜຶ່ງຢູ່ບາງແຂວງ ທີ່ນອນຢູ່ເຂດສາມຫຼ່ຽມພັດທະນາຕິດຕາມກວດການການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຊຸກຍູ້ສົ່ງເສີມຄວາມສາມັກຄີ, ການຮ່ວມມື, ການເປັນຄູ່ຮ່ວມສົ່ງເສີມການເຊື່ອມໂຍງເຊື່ອມຈອດທາງດ້ານເສດຖະກິດຂອງປະເທດ CLV ເພື່ອກ້າວສູ່ການພັດທະນາແບບກວມລວມ ແລະ ຍືນຍົງ, ຮັບປະກັນສັນຕິພາບ ແລະ ສະຖຽນລະພາບໃນຂົງເຂດ 3 ຫຼ່ຽມພັດທະນາ.

ວັນທີ 19 ຕຸລາ 2023 ຄະນະຕິດຕາມກວດກາຮ່ວມຂອງ 3 ສະພາແຫ່ງຊາດ ໄດ້ສືບຕໍ່ເຄື່ອນໄຫວເຮັດວຽກ ຢູ່ແຂວງຊຽງແຕງ ລາຊະອານາຈັກກຳປູເຈຍ ເພື່ອຊຸກຍູ້ ແລະ ສົ່ງເສີມການຕິດຕາມກວດກາສະພາບການ, ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງແຜນປະຕິບັດງານ ແລະ ໂຄງການຮ່ວມມື ໃນເຂດສາມຫຼ່ຽມພັດທະນາ ເປັນຕົ້ນແມ່ນຂົງເຂດວຽກງານການຕ່າງປະເທດ, ເສດຖະກິດ, ການຄ້າ, ການລົງທຶນ, ໂຄງລ່າງພື້ນຖານ, ການຂົນສົ່ງ, ແຮງງານ, ການສຶກສາ, ສາທາລະນະສຸກ, ການທ່ອງທ່ຽວ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊິ່ງລັດຖະບານຂອງສາມປະເທດ ໄດ້ຕົກລົງຮ່ວມກັນ.

ໃນວັນທີ 20 ຕຸລາ 2023, ຄະນະຕິດຕາມກວດກາຮ່ວມ ຂອງ 3 ສະພາແຫ່ງຊາດ ໄດ້ສືບຕໍ່ເຄື່ອນໄຫວເຮັດວຽກ ຢູ່ແຂວງຈຳປາສັກ ຂອງ ສປປ ລາວ ເພື່ອຕິດຕາມກວດກາສະພາບການ,ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງແຜນປະຕິບັດງານ ແລະ ໂຄງການຮ່ວມມືໃນເຂດສາມຫຼ່ຽມພັດທະນາ ເຊິ່ງຄະນະໄດ້ຈັດກອງປະຊຸມພົບປະ ໂດຍມີທ່ານ ປອ. ວິໄລວົງ ບຸດດາຄຳ ເລຂາພັກແຂວງ, ເຈົ້າແຂວງຈຳປາສັກ, ທ່ານປະທານສະພາປະຊາຊົນແຂວງອັດຕະປື, ທ່ານຮອງສະພາປະຊາຊົນແຂວງສາລະວັນ, ຈຳປາສັກແລະເຊກອງພ້ອມດ້ວຍພະແນກການທີ່ກ່ຽວຂ້ອງຂອງແຂວງຈຳປາສັກ ເຂົ້າຮ່ວມກອງປະຊຸມ ໄດ້ຮັບຟັງການລາຍງານກ່ຽວກັບສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໃນກອບສາມຫຼ່ຽມພັດທະນາ (CLV). ທ່ານ ຮສ. ປອ ລິນຄຳ ດວງສະຫວັນ ໃນນາມປະທານກອງປະຊຸມ ໄດ້ມີຄຳເຫັນສັງລວມການຕິດຕາມກວດກາຮ່ວມຂອງ 3 ສະພາແຫ່ງຊາດ ກຳປູເຈຍ, ລາວ ແລະ ຫວຽດນາມ ຢູ່ແຂວງກອນຕຸມ, ຢາລາຍ ສສ. ຫວຽດນາມ, ແຂວງຊຽງແຕງ ຂອງລາຊະອານາຈັກກຳປູເຈຍ ແລະ ຈຳປາສັກ ຂອງ ສປປ ລາວ, ໂດຍໄດ້ລົງເລິກແລກປ່ຽນຄຳຄິດຄຳເຫັນ ແລະ ປຶກສາຫາລືກ່ຽວກັບການສົ່ງເສີມການຮ່ວມມືໃນຂົງເຂດການຕ່າງປະເທດ, ເສດຖະກິດ, ວັດທະນະທຳສັງຄົມ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍສະເພາະການກໍ່ສ້າງພື້ນຖານໂຄງລ່າງ, ການເຊື່ອມໂຍງ, ເຊື່ອມຈອດ, ການຄ້າ, ການລົງທຶນ, ການສຶກສາ, ວັດທະນະທຳ ແລະທ່ອງທ່ຽວ, ການພັດທະນາສີມືແຮງງານ, ຄວາມໝັ້ນຄົງທາງດ້ານສະບຽງອາຫານ, ພະລັງງານ, ການປ່ຽນແປງດິນຟ້າອາກາດ, ການຮ່ວມມືໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ,ການຕ້ານແລະສະກັດກັ້ນບັນຫາຢາເສບຕິດ, ການຄ້າມະນຸດ, ການລັກລອບເຂົ້າ-ອອກເມືອງ ຜິດກົດໝາຍ, ການກໍ່ການຮ້າຍ ແລະ ການຕ້ານອາຊະຍາກຳຂ້າມຊາຍແດນທຸກຮູບແບບ ເພື່ອເຮັດໃຫ້ເຂດສາມຫຼ່ຽມພັດທະນາ ກຳປູເຈຍ-ລາວ-ຫວຽດນາມ ມີສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງ.

ໃນຕອນຄໍ່າຂອງວັນດຽວກັນ, ທີ່ໂຮງແຮມຈຳປາສັກແກຣນ ແຂວງຈຳປາສັກ ໄດ້ມີພິທີລົງນາມ ບົດສະຫຼຸບຜົນຂອງການຕິດຕາມກວດກາຮ່ວມລະຫວ່າງ 3 ສະພາແຫ່ງຊາດ ກຳປູເຈຍ-ລາວ-ຫວຽດນາມ ເຊິ່ງຕາງໜ້າສະພາແຫ່ງຊາດ ແຫ່ງລາຊະອານາຈັກ ກຳປູເຈຍ ແມ່ນທ່ານ ສຸ ຍາລາ ປະທານຄະນະກຳມາທິການການຕ່າງປະເທດ, ການຮ່ວມມືສາກົນ, ສື່ ແລະ ຂໍ້ມູນຂ່າວສານ; ສະພາແຫ່ງຊາດ ແຫ່ງ ສປປ ລາວ ໂດຍແມ່ນທ່ານ ຮສ. ປອ ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ໂດຍແມ່ນທ່ານ ຫວູ ຮາຍ ຮ່າ ປະທານກຳມາທິການການຕ່າງປະເທດ. ໂດຍມີທ່ານ ປອ. ວິໄລວົງ ບຸດດາຄຳ ເຈົ້າແຂວງແຂວງຈຳປາສັກ, ຄະນະຜູ້ແທນຂອງສະພາແຫ່ງຊາດຂອງ 3 ປະເທດ, ຜູ້ຕາງໜ້າຂອງສະພາປະຊາຊົນ ຂອງ 4 ແຂວງ ໃນເຂດ 3 ຫຼ່ຽມພັດທະນາ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງຈຳປາສັກ ເຂົ້າຮ່ວມ.

ຜົນຂອງການຕິດຕາມກວດກາຮ່ວມກັນໃນຄັ້ງນີ້ ຈະນຳໄປລາຍງານຕໍ່ທ່ານປະທານສະພາແຫ່ງຊາດ ຂອງສາມປະເທດ ເພື່ອນຳໄປສະເໜີຕໍ່ໃຫ້ລັດຖະບານ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ຂອງສາມປະເທດ ເພື່ອຊອກຫາວິທີທາງ ແລະ ກົນໄກໃນການຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນ ເຊິ່ງກັນ ແລະ ກັນ ໃນການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ນິຕິກຳ ແລະ ບັນດາເອກະສານທີ່ມີຄວາມສຳຄັນ ເປັນຕົ້ນແຜນປະຕິບັດງານວ່າດ້ວຍການເຊື່ອມຈອດດ້ານເສດຖະກິດຮອດປີ 2030, ແຜນແມ່ບົດວ່າດ້ວຍການພັດທະນາເສດຖະກິດສັງຄົມຮອດປີ 2020 ແລະ ສະບັບປັບປຸງຮອດປີ 2030, ແຜນພັດທະນາການທ່ອງທ່ຽວ ເຂດສາມຫຼ່ຽມພັດທະນາ ກຳປູເຈຍ-ລາວ-ຫວຽດນາມ ສຳລັບປີ 2020-2025 ແລະ ວິໄສທັດຮອດປີ 2030 ແລະ ປະກອບເປັນເນື້ອໃນທີ່ສຳຄັນເຂົ້າໃນກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ CLV ຄັ້ງທີ 1 ທີ່ຈະຈັດຂຶ້ນ ຢູ່ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນເດືອນທັນວາ ປີ 2023.

ນອກນັ້ນ, ຄະນະ ຍັງໄດ້ຢ້ຽມຢາມໂຄງການຕ້ານຕາຝັ່ງເຈື່ອນແມ່ນໍ້າຂອງ ທີ່ໄດ້ຮັບການຊ່ວຍເຫຼືອດ້ານເງິນກູ້ຈາກ ສ.ເກົາຫຼີ, ຢ້ຽມຢາມຟາມຜັກອໍການິກອາໂກ ແລະ ເບິ່ງສະພາບການພັດທະນາເສດຖະກິດ-ສັງຄົມ ຢູ່ແຂວງຈຳປາສັກ.




# ສ່ວນໜ້ອຍ ຂັດສ່ວນຫລາຍ ຄຸນນະທຳ ຂັດຜົນປະໂຫຍດ

**# ດັ້ນກົບເມກ**

ເມື່ອເວົ້າເຖິງການໄດ້ການເສຍຜົນປະໂຫຍດ ໃຜກໍໃຈລຸກວິບວັບຂຶ້ນມາທັນທີ ຖ້າໄດ້ປະໂຫຍດກໍຕື່ນເຕັ້ນ ຖ້າເສຍຜົນປະໂຫຍດກໍໜ້າແຫ່ວໃຈເສົ້າໝອງ ເຊິ່ງເຮົາຕ້ອງແຍກແຍະໃຫ້ອອກ ຖືກຕ້ອງ ວ່າອັນໃດຄືຜົນປະໂຫຍດທີ່ຄວນໄດ້ຮັບ ທີ່ເກີດຈາກການເຮັດວຽກ ແລະ ອັນໃດທີ່ບໍ່ຄວນໄດ້ ແຕ່ຢາກໄດ້ເຂົ້າທຳນອງໃຈຂີ້ໂລບ, ຄວາມຄິດໂລພາ ຖືເອົາແຕ່ປະໂຫຍດຝ່າຍດຽວຈົນບໍ່ສົນສ່ວນລວມ ແລະ ຄົນອ້ອມຂ້າງ ຖ້າວ່າບໍລິສັດໃດ, ໜ່ວຍງານໃດຫາກໄດ້ຫົວໜ້າເຫັນແກ່ໄດ້ ລູກນ້ອງມີຫວັງອຶດແນ່ນອນ.

ຜູ້ຂຽນຍົກຕົວຢ່າງ: ຄຸນນະທຳຂັດຜົນປະໂຫຍດຂອງນັກຮົບຈູ່ລົ້ງ ໃນເລື່ອງສາມກົກຂອງຈີນ ທີ່ຕໍ່ສູ້ເສິກສົງຄາມກັບເລົ່າປີ່ມາຫຼາຍປີ ຈົນໄດ້ໄຊຊະນະປົກຄອງບ້ານເມືອງ ພໍເຖິງເວລາປະຊຸມກັນ ບັນດາເສນາອາມາດກໍສະເໜີໃຫ້ຈັດແບ່ງທີ່ດິນແກ່ຕົນ ແຕ່ຈູລົ້ງສະເໜີຄຳເຫັນຂັດຂວາງທັນທີວ່າ ຄວນເຫັນແກ່ປະຊາຊົນທຸກຍາກທີ່ຕ້ອງການທີ່ດິນປູກເຂົ້າ-ເຮັດຮົ້ວສວນ ເພື່ອແກ້ໄຂບັນຫາເສດຖະກິດປາກທ້ອງຂອງ



ປະຊາຊົນ.

ຜູ້ນຳຢ່າງເລົ່າປີ່ ຈຶ່ງຕັດສິນໃຈແບ່ງທີ່ດິນໃຫ້ປະຊາຊົນ ເຖິງວ່າຈະຂັດໃຈຂຸນນາງສ່ວນໃຫຍ່ກໍຕາມ. ຕົວຢ່າງ ຂ້າງເທິງນີ້ມັນໄດ້ເກີດຄຳຖາມວ່າ: ຄຸນນະທຳແມ່ນຫຍັງ? ການເຮັດເພື່ອສັງຄົມ ເພື່ອປະຊາຊົນສຳຄັນແນວໃດ? ເຖິງແມ່ນວ່າຄຳສະເໜີຂອງຈູ່ລົ້ງ ຈະຂັດຜົນປະໂຫຍດຄົນສ່ວນໃຫຍ່ໃນກອງທັບ ແຕ່ກໍເພື່ອແບ່ງປັນໃຫ້ປະຊາຊົນ ຈູ່ລົ້ງຍອມຖືກກຽດຊັງຂີ້ໜ້າ; ແຕ່ເຂົາເວົ້າ ແລະ ເຮັດເພື່ອປະຊາຊົນ ເຮົາຈະເຫັນທາດແທ້ຄຸນນະທຳແບບຈູ່ລົ້ງ ທີ່ສະເໜີປະໂຫຍດແກ່ປະຊາຊົນ ເຊິ່ງຕ່າງກັບຂຸນນາງບາງກຸ່ມ ທີ່ອາດມີອຸດົມການຢູ່ໃນໃຈ ແຕ່ພໍພົບກັບຕຳໃຫຍ່ກວ່າຂັດຂວາງກໍພ້ອມຈະຍອມຫຼົບໄຫຼໄປຕາມນ້ຳເໜົ່າເໜັນ; ຄຳຖາມວ່າ: ຈູ້ລົ້ງ ໄດ້ຫຍັງແນ່ ທີ່ຂັດຜົນປະໂຫຍດພວກຂຸນນາງ ຄຳຕອບໄດ້ຄວາມກຽດຊັງ ທີ່ສະເໜີຄວາມຄິດຂັດຜົນປະໂຫຍດຂອງພວກເຂົາ ແຕ່ວ່າໄດ້ຫຼັກການຄຸນນະທຳ; ເສຍສະຫຼະເພື່ອຜົນປະໂຫຍດແກ່ຄົນສ່ວນໃຫຍ່ ເຂົ້າທຳນອງ ສ່ວນນ້ອຍຂັດສ່ວນໃຫຍ່ ຄຸນນະທຳຂັດຜົນປະໂຫຍດ.

ຜູ້ຂຽນຄິດວ່າ: ອຸດົມການຄົນບໍ່ມີໃຜຮູ້ ນອກຈາກຈະເວົ້າ ແລະ ສະແດງອອກທາງພຶດຕິກຳ; ຄົນຈະນັບຖືສັດທາແຕ່ຜູ້ເວົ້າທີ່ມີການກະທຳຕາມມາ ສອດຄ່ອງກັນ ບໍ່ແມ່ນເວົ້າດີເຂົ້າຫູ ແຕ່ການກະທຳຂັດໃຈ.

**ສະເໜີແລກປ່ຽນ!**

# ບຸນອອກພັນສາ

**ໂດຍ: ນາງສີດາ**

ບຸນອອກພັນສາ ເປັນອີກບຸນໜຶ່ງທີ່ສຳຄັນທາງພຸດທະສາສະໜາ ແລະ ເປັນປາງບຸນໜຶ່ງທີ່ມີຢູ່ໃນຮີດສິບສອງຄອງສິບສີ່ຂອງລາວເຮົາ ເປັນວັນທີ່ພະສົງສາມະເນນທັງຫຼາຍສິ້ນສຸດໄລຍະການຈຳພັນສາບຳເພັນພຽນພາວະນາ (ຈຳສິນ) ຕະຫຼອດໄລຍະ 3 ເດືອນ ນັບແຕ່ວັນເຂົ້າພັນສາ ຄື ມື້ອອກໃໝ່ 15 ຄ່ຳເດືອນ 8 ເຖິງມື້ອອກໃໝ່ 15 ຄ່ຳເດືອນ 11 ວັນອອກພັນສາ ຫຼື ເອີ້ນອີກຢ່າງໜຶ່ງວ່າ ປະວໍລະນາ ທີ່ແປວ່າ ອະນຸຍາດເປັນການສິ້ນສຸດລະດູຝົນ ແລະ ວັນທີ່ພະສົງສາມະເນນບໍ່ຕ້ອງຈຳພັນສາ ແລະ ອະນຸຍາດໃຫ້ໄປຄ້າງຄືນຢູ່ວັດອື່ນ ຫຼື ອະນຸຍາດໃຫ້ໄປສະແດງທຳມະທີ່ຕົນໄດ້ພຽນມາໃນເວລາຈຳພັນສານັ້ນ ແກ່ອອກຕົນຍາດໂຍມ (ສາສະນິກະຊົນ) ທັງຫຼາຍ ແລະ ອະນຸຍາດໃຫ້ພະສົງຢູ່ພາຍໃນວັດ ໂອວາດຕັກເຕືອນກິລິຍາທີ່ບໍ່ເໝາະສົມເຊິ່ງກັນແລະກັນໄດ້.

ບຸນອອກພັນສາ ກົງກັບມື້ຂຶ້ນ 15 ເດືອນ 11 ຂອງທຸກໆປີ ເຊິ່ງໃນປີນີ້ກົງກັບວັນທີ 29 ຕຸລາ 2023 ເຊິ່ງໃນຕອນເຊົ້າ ອອກຕົນຍາດໂຍມທັງຫຼາຍກໍຈະພາກັນຫ້າງຫາກະກຽມເຄື່ອງທານອາຫານຫວານຄາວ, ເຂົ້າຕົ້ມ, ເຂົ້າໜົມ ແລະ ໝາກໄມ້ ເພື່ອໄປທຳບຸນໃສ່ບາດຢາດນ້ຳໃຫ້ທານ; ໃນຕອນຄ່ຳ ກໍມີການວຽນທຽນ ແລະ ໄຕ້ທຽນບູຊາຕາມບ້ານເຮືອນຂອງໃຜລາວ ແລະ ມີການລອຍກະໂທງ, ໄຫຼເຮືອໄຟ ພ້ອມກັນຕີຄ້ອງຕີກອງເສບງັນຢ່າງຄຶກຄື້ນ ແລະ ມ່ວນຊື່ນ.

ການປະຕິບັດແບບນີ້ແມ່ນຖືເອົາຕາມແບບຢ່າງຂອງເທບພະບຸດ ແລະ ເທບພະທິດາທັງຫຼາຍ ທີ່ແຫ່ພະສຳມາສຳພຸດທະເຈົ້າ ເມື່ອຄັ້ງພະອົງສະເດັດຈາກຊັ້ນດາວະດຶງ ຄືເມືອງສະຫວັນຊັ້ນຟ້າ ລົງມາສູ່ເມືອງມະນຸດ ໃນມື້ແຮມ 1 ຄ່ຳ ເດືອນ 11, ມີຂັ້ນໄດແກ້ວ, ຂັ້ນໄດຄຳ ແລະ ຂັ້ນໄດເງິນ ເພື່ອໃຫ້ພະອົງສະເດັດລົງມາ ແຕ່ພະອົງແມ່ນລົງມາຕາມຂັ້ນໄດຄຳສ່ວນເທບພະບຸດ, ເທບພະທິດາ ແລະ ສາວົກທັງຫຼາຍ ແມ່ນລົງຕາມຂັ້ນໄດເງິນ ແລະ ຂັ້ນໄດແກ້ວ ທີ່ຕັ້ງຢູ່ສອງຟາກຂ້າງຂອງຂັ້ນໄດຄຳ. ນອກນັ້ນ, ຢູ່ຕາມບາງເຂດແຂວງ ກໍມີການຈັດງານແຂ່ງຂັນຊ່ວງເຮືອຕາມປະເພນີ ນັບແຕ່ມື້ອອກພັນສາຈົນຮອດເດືອນ 12 ເພັງ ປະຊາຊົນຜູ້ມີໃຈໃສສັດທາໃນພຸດທະສາສະໜາ ໄດ້ນຳຜ້າມະຫາກະຖິນໄປຖວາຍແກ່ພະສົງຜູ້ຈຳພັນສາຄົບໄຕມາດ ໃນຊ່ວງເວລາສາມເດືອນນັ້ນເອງ ເຊິ່ງນອກຈາກການໄຫຼເຮືອໄຟ ຫຼື ກະໂທງໃນມື້ອອກພັນສາແລ້ວ ຈຸດປະສົງເພື່ອສົມມາຄາລະວະ ພ້ອມທັງບວງສວງຂໍໂຊກຂໍລາບຈາກພະຍານາກ ແລະ ເທວະດາ ອົງທີ່ໄດ້ປົກປັກຮັກສາແມ່ນ້ຳລຳເຊຕະຫຼອດຮອດຫ້ວຍຮ່ອງຄອງບຶງ ບ່ອນທີ່ຊາວພຸດທັງຫຼາຍໄດ້ທຳມາຫາກິນຢ່າງສະຫງົບສຸກແຕ່ບູຮານນະການມາ. ການທີ່ພວກຊາວພຸດທັງຫຼາຍແຫ່ວຽນທຽນ, ເຮັດເຮືອໄຟໂຄກ ແລະ ໄຕ້ທູບໄຕ້ທຽນ ແມ່ນຖືເອົາຕາມແບບຢ່າງຂອງເທບພະບຸດ ແລະ ເທບພະທິດາທັງຫຼາຍ ທີ່ແຫ່ພະສຳມາສຳພຸດທະເຈົ້າ ເມື່ອຄັ້ງພະອົງສະເດັດຈາກຊັ້ນດາວະດຶງ ການແຫ່ພະອົງໃນຄັ້ງນັ້ນ ເປັນຂະບວນການແຫ່ທີ່ຍິ່ງໃຫຍ່ ແລະ ພະອົງມີລັດສະໝີເປັ່ງປະກາຍສະຫວ່າງສະໄຫວໄປທົ່ວໂລກ ເຮັດໃຫ້ເທບພະບຸດ ແລະ ເທບທິດາ ທີ່ຢູ່ເມືອງສະຫວັນຊັ້ນຟ້າ, ມະນຸດ ທີ່ຢູ່ໃນໂລກຂອງມະນຸດ ແລະ ສັດນະຮົກທຸກປະເພດ ທີ່ຢູ່ຊັ້ນຕ່ຳສຸດໄດ້ເຫັນແຈ້ງສະພາບຂອງກັນແລະກັນໝົດ ດັ່ງນັ້ນ, ພວກເຮົາຊາວພຸດທັງຫຼາຍ ໂດຍຖືເອົາຕາມຄວາມເຊື່ອ ທີ່ມີມາແຕ່ກ່ອນນັ້ນມາປະຕິບັດກັນຈົນເປັນປະເພນີ ສືບຕໍ່ກັນມາເທົ່າທຸກວັນນີ້.



# ຂຽນຄຳລາວໃຫ້ຖືກ

**#ຄູແສງ**

| ຄຳຖືກ | ຄຳຜິດ |
|---|---|
| ສູ່ຂວັນ | ~~ຊູ່ຂ້ອນ~~ |
| ສ່ຳໃດ? | ~~ຊ່ຳໃດ?~~ |
| ຊູ່ມື້ນີ້ | ~~ສູ່ມື້ນີ້~~ |
| ຊິໄປໃສ? | ~~ສິໄປໃສ?~~ |
| ຕະຫຼົກ | ~~ຕະລົກ~~ |
| ໃບໄມ້ຫຼົ່ນ | ~~ໃບໄມ້ລົ່ນ~~ |
| ພ່າຍແພ້ | ~~ຜ່າຍແພ້~~ |
| ໜ້າຮັກ | ~~ນ່າຮັກ~~ |
| ໜ່າເຂົ້າ | ~~ມ່າເຂົ້າ~~ |




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ວິທີແກ້ໄຂ**

- ບັນດາອົງການນຳ ຕ້ອງມີວິທີນຳພາໃຫ້ຖືກຕ້ອງ ແຕ່ລະວຽກຕ້ອງໃຫ້ມີການຊີ້ແຈງວິທີເຮັດ.
- ຊັ້ນສູງຕ້ອງເຂົ້າໃຈແຈ້ງ ສະພາບຂອງຂັ້ນລຸ່ມ ແລະ ສະພາບຂອງປະຊາຊົນ ເພື່ອນຳພາໃຫ້ຖືກ.
- ເວລາລົງມະຕິໃນວຽກອັນໃດ ຕ້ອງລະມັດລະວັງ ແລະ ຄົ້ນຄວ້າໃຫ້ເຂົ້າໃຈຄັກ ແລ້ວຈຶ່ງລົງມະຕິ.
- ມະຕິຕົກລົງແຕ່ລະອັນ ຕ້ອງຮີບສົ່ງລົງໄປໃຫ້ເຖິງຊັ້ນລຸ່ມ ເຖິງສະມາຊິກຂອງພັກ ແລະ ເຖິງປະຊາຊົນໄວ.

ວິທີງ່າຍທີ່ສຸດ ແມ່ນໃຫ້ເປີດກອງປະຊຸມລວມກັບສະມາຊິກຂອງພັກ ກັບປະຊາຊົນ ໃຫ້ແຕ່ງຄົນລົງໄປລາຍງານ ແລະ ຊີ້ແຈງໃຫ້ເຂົາເຈົ້າເຂົ້າໃຈຄັກ.

- ພວກຢູ່ຊັ້ນລຸ່ມ, ສະມາຊິກຂອງພັກ ແລະ ປະຊາຊົນ ຕ້ອງຖົກຖຽງກັນກ່ຽວກັບມະຕິຕົກລົງ ແລະ ຄຳສັ່ງນັ້ນໃຫ້ແຈ່ມແຈ້ງ. ໃຫ້ເຂົ້າໃຈຄວາມໝາຍຂອງມັນຢ່າງເຊື່ອມຊຶມ ແລະ ວາງວິທີປະຕິບັດໃຫ້ຖືກ.
- ຊັ້ນລຸ່ມຕ້ອງລາຍງານໄປໃຫ້ຊັ້ນເທິງ, ຊັ້ນເທິງຕ້ອງກວດກາດູແລການປະຕິບັດງານຂອງຊັ້ນລຸ່ມ.

**ສ) ພະຍາດອິດສາ:**

ອັນໃດກໍຢາກໃຫ້ສະເໝີກັນໝົດ, ເມື່ອຊັ້ນເທິງມີວຽກຟ້າວໄດ້ຂີ່ມ້າ ຫຼື ຂີ່ລົດໄປເຮັດວຽກ, ຊັ້ນລຸ່ມກໍຢາກຂີ່ມ້າຂີ່ລົດຄືກັນ. ເມື່ອມີຜູ້ຮັບຜິດຊອບຫຼາຍວຽກໄດ້ຢູ່ເຮືອນກວ້າງ, ຜູ້ທີ່ບໍ່ມີວຽກຫຼາຍກໍທວງເອົາເຮືອນກວ້າງຄືກັນ. ເວລາເພີ່ມອາຫານໃຫ້ທະຫານທີ່ຖືກບາດເຈັບ ກໍຢາກໃຫ້ເພີ່ມເພີ່ມທໍ່ກັນໝົດ ບໍ່ວ່າຜູ້ເຈັບໜັກ ຫຼື ເຈັບເບົາ, ເວລາເຮັດວຽກຫຍັງກໍຢາກໃຫ້ທັງຜູ້ເຖົ້າ, ຜູ້ໜຸ່ມ, ເດັກນ້ອຍຜູ້ແຂງແຮງ ແລະ ຜູ້ບໍ່ແຂງແຮງ ເຮັດເທົ່າກັນໝົດ ບໍ່ໃຫ້ໃຜລື່ນໃຜ, ວຽກຢ່າງໜຶ່ງຜູ້ດຽວເຮັດກໍໄດ້ ກໍບໍ່ຍອມເຮັດ ໃຫ້ໝົດທຸກຄົນເຮັດນຳກັນຈຶ່ງຍອມເຮັດ.

ພະຍາດນີ້ ເກີດຂຶ້ນໄດ້ ກໍຍ້ອນຜູ້ຕິດພະຍາດນັ້ນ ເຂົ້າໃຈຜິດວ່າຄວາມ ເສຍສະເໝີພາບ ບໍ່ເຂົ້າໃຈວ່າຜູ້ແຂງແຮງຕ້ອງຫາບໜັກ. ຜູ້ບໍ່ແຂງແຮງຫາບເບົາກວ່າ, ຜູ້ເຮັດວຽກໜັກຕ້ອງກິນຫຼາຍ ຜູ້ເຮັດວຽກເບົາກິນໜ້ອຍ, ດັ່ງນັ້ນ ຈຶ່ງແມ່ນສະເໝີພາບ.

ອ່ານຕໍ່ສະບັບໜ້າ...

# ຜົນກະທົບຂອງການນັ່ງ



## ສຸກສະບາຍຫາຍໂຣຄ

ໂດຍ: ຜູ້ອື່ນ



ການນັ່ງເຮັດວຽກຢ່າງຕໍ່ເນື່ອງເປັນດົນຈົນເກີນໄປ ໂດຍບໍ່ໄດ້ມີການໜັງຕີງ ຫຼື ລຸກອອກໄປທາງໃດເລີຍ ເປັນໜຶ່ງສາເຫດຂອງອາການເລືອດແຂງໂຕເປັນກ້ອນ ນັກວິໄຈປະເທດນິວຊີແລນ ພົບວ່າ ການນັ່ງເຮັດວຽກຫຼາຍຊົ່ວໂມງຕິດຕໍ່ກັນ ອາດຈະເຮັດໃຫ້ເລືອດແຂງຕົວເປັນກ້ອນ ເຊິ່ງເປັນອັນຕະລາຍເຖິງແກ່ຊີວິດໄດ້ ອາການນີ້ເອີ້ນກັນວ່າ: ອາການເລືອດກ້າມຢູ່ເສັ້ນເລືອດດຳ ເຮັດໃຫ້ເລືອດໄຫຼວຽນບໍ່ສະດວກ (DEEP VEIN THROMBOSIS) ເຊິ່ງມັກເກີດຢູ່ບໍລິເວນຂາ ຈາກການນັ່ງຢ່ອນຂາເປັນເວລາດົນ ແລະ ມັກຈະເກີດຂຶ້ນເວລາມີເລືອດຊຸ້ນຢູ່ໃນເສັ້ນເລືອດດຳ ມັນຈະຄ່ອຍໆ ປ່ຽນຕົວມັນເອງໄປເປັນກ້ອນເລືອດ ເຊິ່ງຈະສາມາດສັງເກດເຫັນໄດ້ຢ່າງຈະແຈ້ງຄື: ຂາຈະເລີ່ມມີອາການບວມ, ສ່ວນອາການທີ່ອັນຕະລາຍຈະເກີດຂຶ້ນ ເມື່ອມີເລືອດແຕກອອກ ແລະ ແລ່ນໄປເຖິງຫົວໃຈ ຫຼື ອະໄວຍະວະພາຍໃນທີ່ສຳຄັນຂອງຮ່າງກາຍ ເຊິ່ງບໍ່ສາມາດຄາດຄະເນ ຫຼື ຄາດເດົາເອົາໄດ້.

ສະນັ້ນ, ບໍ່ຄວນນັ່ງເຮັດວຽກ ຫຼື ຫຼິ້ນຄອມພິວເຕີ ນານຈົນເກີນໄປ ຖ້າຫຼີກເວັ້ນບໍ່ໄດ້ ໃຫ້ພະຍາຍາມເໜັງຕີງ ແລະ ເຄື່ອນໄຫວຂໍ້ຕີນຂໍ້ມື ພ້ອມທັງດື່ມນ້ຳໃຫ້ຫຼາຍ; ພ້ອມນັ້ນ, ກໍຄວນຈະລຸກຂຶ້ນຢຽດແຂນ-ຂາຊົ່ວໂມງລະເທື່ອ ພ້ອມທັງນັ່ງເຮັດວຽກໃນທ່າທີ່ຖືກຕ້ອງເໝາະສົມ ຈະເຮັດໃຫ້ສາມາດຫຼຸດຜ່ອນຄວາມສ່ຽງລົງໄດ້.




## ອາດ ກະວີລາວ

# ຄູພູດອຍ

ໂດຍ: ລູກທາດສາມປາງ

❊ ພູຜາເຫວຮ່ອມຫ້ວຍ
ເປັນຊອຍວອຍສູງຊັນ
ພຶກສາຊອນແຊມຂຶ້ນ
ມ່ານໝອກມົວຍິ່ງຍ້ອມ

ຂຶ້ນໄຂວ່ເນີນດອຍ
ກ່າຍກັນກວມພື້ນ
ເຕັມຜືນຢາຍທົ່ວ
ໄຫຼອ້ອມໜ່ວຍພູ

❊ ໂງ່ເງ່ເຂົາໃຫຍ່ນ້ອຍ
ຫ້ວຍນ້ຳໃສລິນລົງ
ບ້ານບ່ອນເຮືອນແຖວຈ້າຍ
ເຫັນຄາເມໝູ່ບ້ານ

ຫຼາຍຍ່ານຍາວໄກ
ຮ່ອມພະນັງຫີນກ້ອນ
ສາຍພູຢາຍຢູ່
ລຽນຖ້ານຕໍ່ຖານ

❊ ນັບວ່ານານຖ່ອງຖ້ອນ
ຮຽນຈາກລາເຮືອນຊານ
ໜ້າທີ່ທົນທານສູ້
ຈິງໃຈມາກໍ່ສ້າງ

ເດີນດ່ອນວຽນມາ
ດຸ່ງດັນແດນພີ້
ວິຊາຄູວຽກໃຫຍ່
ທາງກ້ຳແກ່ວດອຍ

❊ ເດັກນ້ອຍຫຼານອ່ອນຫຼ້າ
ພູມລຳເນົາເນີນພູ
ຍັງງົມງອມຫງອຍງ້ຳ
ບ້ານປ່າເຫີນຫ່າງເບື້ອງ

ເຂດປ່າຊາວເຂົາ
ຂາດຄູເຫຼົ່າສ້ອມ
ເງົາດຳໄຮ້ສະຫວ່າງ
ເມືອງກວ້າງຮຸ່ງສະໄໝ

❊ ເຖິງແມ່ນໄກຍິ່ງເຍີ້ນ
ຈັນຍາທຳຂອງຄູ
ປຽບເກືອເຄັມຂັງຂ້ອນ
ເພີ່ມຄວາມເຄັມລົ່ນເລື້ອຍ

ແດນຖິ່ນຈະເລີນຕາ
ທ່ຽງຕົງແຂງເຂັ້ມ
ນິລັນດອນບໍ່ຈາງເປື່ອຍ
ສະຖິດໝັ້ນບໍ່ອ່ອນໄຫວ ແນ່ແລ້ວ

❊ ຊາດມອບໝາຍຕໍ່ຕັ້ງ
ປະຊາກອນເດັກດອຍ
ເຂດກັນດານວິຊາດ້ອຍ
ລໍຄູສອນຊ່ວຍຍູ້

ຄູສັ່ງລົງສອນ
ຊ່ອຍແຍງຍໍປັ້ນ
ເດັກດອຍຖ້າຢູ່
ຄວາມຮູ້ສິ່ງວິຊາ

❊ ຮຽນອາສາດຸ່ງໜ້າ
ສອນຂີດຂຽນກຳກາ
ໃຫ້ພວກເຂົາເຫັນແຈ້ງ
ບໍ່ໃຫ້ຄາເຄິ່ງຄ້າງ

ຫຼອມຫຼໍ່ນຳຮຽນ
ທຸກວິຊາພາເວົ້າ
ຫູຕາແສງສະຫວ່າງ
ຂຽນໄດ້ອ່ານເປັນ

❊ ເສັ້ນທາງເດີນຍາກຫຍຸ້ງ
ແຕ່ວ່າຮຽນສຸກໃຈ
ໃຫ້ລູກຫຼານດອຍໄດ້
ຄວາມຮູ້ໄຂຄ່ອງແຄ້ວ

ລຽບລັ່ນພູຜາ
ໄຝ່ສອນຫຼານນ້ອຍ
ປັນຍາໄວນັ້ນໃໝ່
ແວວກ້າສະຫງ່າໃສ

❊ ໂຮງຮຽນໄກຫ່າງໂຄ້ງ
ມວນໝູ່ເດັກຊາວດອຍ
ເຂົ້າມາຮຽນຫຼາຍໜ້າ
ສາຍເລືອດຄູຢ່າງຂ້ອຍ ຄອຍສິດສອນບໍ່ທໍ້

ທາງກິ່ງສາຍພູ
ຍ່າງວອຍມາເຕົ້າ
ອາຄານຝາແປ້ນຫ່າງ
ພໍນ້ອຍທ່ອງໃບ ດອກນາ



# ຫັກຫາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັບເອງ ບໍ່ເຄັ່ງພິທີການ)

\# ສາວຈົ້ມ

❊ **ເສັດ**ສິ້ນລົງຢ່າງເປັນທາງການ ກອງປະຊຸມ **ຍົກສູງຄຸນນະພາບທາງດ້ານເນື້ອໃນ** ໃຫ້ແກ່ກອງປະຊຸມສະໄໝສາມັນ**ເທື່ອທີ 6** ຂອງສະພາແຫ່ງຊາດ **ຊຸດທີ IX** ເຊິ່ງຈັດຂຶ້ນວັນທີ **16-20 ຜ່ານມາ** ທີ່ສູນຝຶກອົບຮົມຫຼັກຫ້າ ນະຄອນຫຼວງວຽງຈັນ ຫຼາຍບັນຫາຍົກຂຶ້ນ ຖາມຕອບຕົງປະເດັນ ອະທິບາຍລາຍງານ ເພື່ອກຽມຄວາມພ້ອມ ທັງພ່າປັບປຸງແກ້ ບາງປະເດັນຄາຂອດ ບໍ່ໃຫ້ຖືງຂອດຄ້າງ ຊ່ຳເຮື້ອຍືດຍາວ **ນັ້ນແລ້ວ!**

❊ **ກອງ**ປະຊຸມສະໄໝສາມັນ **ເທື່ອທີ 6** ຂອງສະພາແຫ່ງຊາດ **ຊຸດທີ IX** ກຽມໄຂຂຶ້ນຢ່າງເປັນທາງການ ໃນວັນທີ **31 ຕຸລາ ຫາ 21 ພະຈິກ 2023** ກອງປະຊຸມເທື່ອນີ້ ມີຫຼາຍວຽກສຳຄັນ ຄືວຽກຂອງລັດຖະບານ ວຽກສານ-ໄອຍະການພ້ອມ ວຽກກວດສອບ-ກວດການັ້ນ ທັງ **2** ກົດໝາຍສ້າງໃໝ່ **6** ສະບັບເພີ່ມປັບປຸງເພື່ອແກ້ໄຂ ໃຫ້ຮັດກຸມ ວຽກສະພາເພີ່ມເນັ້ນ ຍໍ່ຍົກຜົນງານ ທັງປະກອບຄຳເຫັນ ໃສ່ປະເດັນຫຼາຍຂໍ້ ພໍຮອດວາລະທ້າຍ ຫຼາຍມະຕິຊີ້ບົ່ງບອກ ຜົນຮັບຮອງວຽກໄວ້ ຫຼາຍອັນພົ້ນເດັ່ນປະເດັນ **ທ່ານເອີຍ!**

## ຊວນຍິ້ມ

\# ແອ່ນຕຸ້ງ

### ຄຳຖາມເປັນເຫດ

ມື້ໜຶ່ງເອື້ອຍຄູຖາມທ້າວກິວ່າ

+ອານບີ້ເລີ່ມຕົ້ນດ້ວຍໂຕຫຍັງ?

-ເລີ່ມຕົ້ນດ້ວຍໂຕ ອ

+ຜິດ! ອານບີ້ເລີ່ມຕົ້ນດ້ວຍໂຕ ອ ຊັ້ນຕວ່າ

-ຜິດຈັ່ງໃດ ອານບີ້ອັບອາທິດ

+?!?!



## ຄະຕິເຕືອນໃຈ

\#ດອກຫຍ້າ

ດອກໄມ້ໃຫ້ກິ່ນຫອມ

ການເຝິກຊ້ອມໃຫ້ຄວາມຊຳນານ




# ກະສິກຳ-ກະເສດ

"ກະສິກຳ" ເປັນຄຳນາມຈາກເຄົ້າປາລີ ປະກອບດ້ວຍຄຳວ່າ Kasi (ກະສີ) ໝາຍເຖິງ "ການໄຖ, ການປູກ" ແລະ Kamma (ກັມມະ) ແລ້ວແປງສຽງເປັນລາວວ່າ "ກຳ" ໝາຍເຖິງ "ການເຮັດ, ການທຳ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ກະສິກຳ" ກໍໝາຍເຖິງ "ການເຮັດໄຮ່ໄຖນາ, ການປູກຝັງ" ເຊັ່ນ

- ລາວເຮັດວຽກຢູ່ກະຊວງກະສິກຳ-ປ່າໄມ້.

- ຢູ່ໃນກົດໝາຍວ່າດ້ວຍກະສິກຳ ປີ 1998 ໃນມາດຕາ 2 ໄດ້ນິຍາມຄຳວ່າ ກະສິກຳ ດັ່ງນີ້: ກະສິກຳແມ່ນການປູກຝັງ, ການລ້ຽງສັດ ແລະການປະມົງ ເພື່ອຕອບສະໜອງທາງດ້ານທັນຍາຫານ ແລະ ອາຫານໃຫ້ແກ່ສັງຄົມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳປຸງແຕ່ງ ລວມທັງເປັນສິນຄ້າຮັບໃຊ້ພາຍໃນ ແລະສົ່ງອອກຕ່າງປະເທດ.

- ສປປ ລາວ ຫຼຸດຜ່ອນການນຳເຂົ້າສິນຄ້າກະສິກຳເພື່ອສົ່ງເສີມຜູ້ປະກອບການພາຍໃນ.

"ກະເສດ" ເປັນຄຳນາມຈາກເຄົ້າສັນສະກິດ Kṣetra (ກະເສຕະຣະ) ແປງເປັນສຽງລາວວ່າ "ກະເສດ" ໝາຍເຖິງ "ທີ່ດິນທົ່ງນາ, ໄຮ່ນາ, ດິນສຳລັບໃຊ້ໃນການປູກພືດພັນທັນຍາຫານ". ແຕ່ເມື່ອໄປປະສົມກັບຄຳອື່ນກໍຈະມີຄວາມໝາຍຄືກັບ "ກະສິກຳ" ເຊັ່ນ

- "ກະເສດສາດ" ກໍໝາຍເຖິງ "ວິຊາວ່າດ້ວຍການກະເສດ ທີ່ປະກອບດ້ວຍ ການປູກຝັງ ລ້ຽງສັດ ແລະປະມົງ".

- ກະເສດສຸມ ໝາຍເຖິງ "ການເຮັດນາຫຼືສວນດ້ວຍການໃຊ້ວິທະຍາການໃໝ່ ເພື່ອໃຫ້ໄດ້ຜົນຜະລິດຫຼາຍ, ການປູກພືດໃນເນື້ອທີ່ຈຳກັດແຕ່ໃຫ້ໄດ້ຜົນຫຼາຍ.

- ກະເສດຕະກຳ ໝາຍເຖິງ "ການເຮັດໄຮ່ໄຖນາ, ປູກພືດຜັກ, ລ້ຽງສັດ, ການຫາປາ, ການປ່າໄມ້".

- ກະເສດຕະກອນ ມີຄວາມໝາຍດຽວກັບ ກະສິກອນ ຫຼື ຜູ້ເຮັດນາເຮັດສວນ.

#ຂໍ້ສັງເກດ: ມີຄົນຕັ້ງບັນຫາວ່າ ເປັນຫຍັງ ຄະນະກະເສດສາດ ທີ່ຂຶ້ນກັບມະຫາວິທະຍາໄລແຫ່ງຊາດບໍ່ຕັ້ງຊື່ວ່າ ຄະນະກະສິກຳ? ຕາມປະຫວັດຂອງຄະນະກະເສດສາດ ເພິ່ນໄດ້ບັນທຶກໄວ້ວ່າ "ໂຮງຮຽນກະເສດນາບົງໄດ້ສ້າງຕັ້ງຂຶ້ນ ວັນທີ 9 ທັນວາ 1975 ໂດຍປ່ຽນມາຈາກໂຮງຮຽນກະສິກຳ ແລະ ປ່າໄມ້ຊັ້ນກາງ. ສະໜອງນັກວິຊາການໃນ 5 ສາຂາວິຊາ (ປູກຝັງ, ລ້ຽງສັດ, ປ່າໄມ້, ກົນຈັກ ແລະ ຊົນລະປະທານ). ຈົນຮອດປີ 1996 ຈຶ່ງໄດ້ເຂົ້າເປັນຄະນະວິຊາໜຶ່ງ ຂອງມະຫາວິທະຍາໄລແຫ່ງຊາດ ເອີ້ນວ່າ ຄະນະກະເສດສາດ ແລະ ປ່າໄມ້ ຂຶ້ນກັບກະຊວງສຶກສາທິການ. ໃນປີ 2000, ຂະແໜງປ່າໄມ້ ໄດ້ແຍກອອກເປັນຄະນະປ່າໄມ້.

ຈາກປະຫວັດຂອງຄະນະກະເສດສາດ ກໍຊີ້ໃຫ້ເຫັນ ທັງ ກະສິກຳ ແລະ "ກະເສດ" ທີ່ເຮົາໃຊ້ໃນປັດຈຸບັນແມ່ນເປັນຄຳທີ່ມີຄວາມໝາຍອັນດຽວກັນ.

# IMF ມີຄວາມປະທັບໃຈຕໍ່ກັບການເຕີບໂຕຂອງເສດຖະກິດ ຫວຽດນາມ

ອີງຕາມການລາຍງານຂ່າວເມື່ອວັນທີ 20 ຕຸລາ 2023 ໃຫ້ຮູ້ວ່າ: ອາຊີ-ປາຊີຟິກ ຍັງແມ່ນຈຸດເດັ່ນໃນຮູບພາບເສດຖະກິດທົ່ວໂລກ, ໃນຂະນະທີ່ມີການຜັນແປດ້ານພູມສາດການເມືອງຄືໃນປັດຈຸບັນ, ນີ້ແມ່ນຂໍ້ສັງເກດຂອງກອງທຶນເງິນຕາສາກົນ (IMF) ໃນບົດລາຍງານຄວາມຫວັງເສດຖະກິດອາຊີ-ປາຊີຟິກ ທີ່ປະກາດເມື່ອບໍ່ດົນມານີ້ ຢູ່ສິງກະໂປ. ຕາມການຄາດຄະເນຂອງ IMF ແລ້ວ, ການເຕີບໂຕ GDP ຂອງພາກພື້ນອາຊີ-ປາຊີຟິກ ໃນປີນີ້ອາດສາມາດບັນລຸ 4,6% ເມື່ອທຽບໃສ່ລະດັບ 3,9% ຂອງປີ 2022 ແລະ ຈະສືບຕໍ່ແມ່ນຈຸດເດັ່ນເມື່ອທຽບໃສ່ການເຕີບໂຕທົ່ວໂລກຄາດຄະເນຈະບັນລຸ 3% ໃນປີ 2023.



ຂ່າວລະບຸວ່າ: ສຳລັບເສດຖະກິດຫວຽດນາມ, ນັກຊ່ຽວຊານ IMF ຮັກສາລະດັບການຄາດຄະເນການເຕີບໂຕ GDP 4,7% ໃນປີນີ້, ໄດ້ສະແດງຄວາມປະທັບໃຈກ່ຽວກັບຄວາມຫວັງໃນໄລຍະກາງ, ດ້ວຍການຄາດຄະເນການເຕີບໂຕ GDP ບັນລຸ 5,8% ໃນປີ 2024 ແລະ 6,9% ໃນປີ 2025. ບັນລຸໃນລະດັບນີ້ແມ່ນຍ້ອນການສົ່ງອອກຂອງຫວຽດນາມ ໄດ້ຮັບຜົນກະທົບຈາກການຫຼຸດລະດັບຄວາມຕ້ອງການຢູ່ພາຍນອກໃນປີນີ້. ແຕ່ທ່ານຊານາກາ ແພຣິສ ຫົວໜ້າພາກສ່ວນຄົ້ນຄວ້າພາກພື້ນຂຶ້ນກັບກົມອາຊີ-ປາຊີຟິກ ຂອງ IMF ຖືວ່າ: ມີຫຼາຍສັນຍານກ່ຽວກັບການຟື້ນຟູຂອງ ຫວຽດນາມໃນໄຕມາດ IV/2023 ແລະດ້ວຍບັນດາມາດຕະການປະຕິຮູບໄດ້ຮັບການປະຕິບັດ, ຫວຽດນາມ ຈະຜ່ານຜ່າສິ່ງທ້າທາຍໃນໄລຍະສັ້ນ ແລະ ຈະຮັກສາກຳລັງໜູນເຕີບໂຕໃນໄລຍະກາງ.

# ປະຊາຊົນອາເຈນຕິນາ ປ່ອນບັດເລືອກຕັ້ງທ່ານກາງວິກິດເສດຖະກິດ

ຕາມການລາຍງານຂ່າວໃຫ້ຮູ້ວ່າ: ປະຊາຊົນອາເຈນຕິນາໄດ້ອອກໄປໃຊ້ສິດລົງຄະແນນສຽງໃນການເລືອກຕັ້ງທົ່ວໄປໃນວັນທີ 22 ຕຸລາຜ່ານມາ ທ່າມກາງວິກິດເສດຖະກິດທີ່ສາຫັດໃນຮອບສອງທົດສະວັດ ເຊິ່ງຊຸກດັນໃຫ້ຜູ້ສະໝັກກຸ່ມເສລີນິຍົມຂວາຈັດ ກາຍມາເປັນໜຶ່ງໃນຕົວເກງ ແລະ ອາດໄດ້ຮັບໄຊຊະນະໄປຄອງ.

ໜ່ວຍເລືອກຕັ້ງໄດ້ເລີ່ມເປີດໃຫ້ປະຊາຊົນໃຊ້ສິດໃນເວລາ 8:00 ໂມງ (18:00 ໂມງ ຕາມເວລາປະເທດລາວ) ໂດຍມີຜູ້ສະໝັກທີ່ເປັນຕົວເກງ 3 ຄົນ ໄດ້ແກ່ທ່ານ ຈາວິເອີ ມິເລຍ ນັກເສດຖະສາດ, ທ່ານ ເຊີຈິໂອ ເມສຊາ ລັດຖະມົນຕີເສດຖະກິດສາຍກາງຜູ້ສະໜັບສະໜູນລັດທິເປຣອນຂອງທ່ານ ຂວນ ເປຣອນ ອະດີດປະທານາທິບໍດີ ແລະ ທ່ານ ປາທຣິເຈຍ ບູລຣິດ ນັກການເມືອງສາຍອະນຸລັກນິຍົມ.

ທ່ານ ຈາວິເອີ ມິເລຍ ອະດີດຜູ້ດຳເນີນລາຍການໂທລະພາບທີ່ມີບຸກຄະລິກໂຜງຜາງ ຈົນໄດ້ຮັບການປຽບທຽບກັບອະດີດປະທານາທິບໍດີ ໂດນັລ ທຣຳ ຂອງອາເມຣິກາ ສ້າງຄວາມປະຫຼາດໃຈດ້ວຍການຄວ້າໄຊຊະນະໃນການເລືອກຕັ້ງຂັ້ນຕົ້ນໃນເດືອນສິງຫາຜ່ານມາ, ທ່ານໄດ້ຮັບສຽງສະໜັບສະໜູນຈາກຜູ້ມີສິດເລືອກຕັ້ງທີ່ບໍ່ພໍໃຈຕໍ່ສະພາບເສດຖະກິດ-ສັງຄົມທີ່ເປັນຢູ່ໃນປັດຈຸບັນ ດ້ວຍອັດຕາເງິນເຟີ້ເພີ່ມຂຶ້ນເຖິງ 138% ແລະ ຄວາມທຸກຍາກທີ່ສົ່ງຜົນກະທົບຕໍ່ປະຊາກອນເຖິງສອງໃນຫ້າຂອງປະເທດ.

ເຖິງຢ່າງໃດກໍດີ, ໃນການເລືອກຕັ້ງຂັ້ນຕົ້ນດັ່ງກ່າວ ທ່ານ ຈາວິເອີ ມິເລຍ ຊະນະດ້ວຍຄະແນນສຽງທີ່ບໍ່ຫ່າງກັນຫຼາຍ ເພາະທ່ານ ເຊີຈິໂອ ເມສຊາ ແລະ ທ່ານ ປາທຣິເຈຍ ບູລຣິດ ກໍໄດ້ຄະແນນຕາມຫຼັງມາຕິດໆ. ຈາກຜົນສຳຫຼວດຄວາມຄິດເຫັນຂອງສຳນັກຕ່າງໆຈຶ່ງຄາດວ່າ ຜົນການເລືອກຕັ້ງຄັ້ງນີ້ຈະອອກມາສູສີ ໂດຍຜູ້ສະໝັກທັງ 3 ຄົນຈະແບ່ງຄະແນນກັນໄປ ແລະ ອາດຕ້ອງໄປຕັດສິນກັນອີກໃນການເລືອກຕັ້ງຮອບ 2.

ທັງນີ້, ໜ່ວຍເລືອກຕັ້ງໄດ້ເລີ່ມປິດຫີບໃນເວລາ 18:00 ໂມງ (4:00 ໂມງ ຂອງວັນທີ 23 ຕຸລາຕາມເວລາປະເທດລາວ) ຈາກການປະກາດຜົນເບື້ອງຕົ້ນໃນວັນດຽວກັນເຫັນວ່າ: ທ່ານ ເຊີຈິໂອ ເມສຊາ ໄດ້ຮັບຄະແນນສຽງທັງໝົດ 37% ນຳໜ້າທ່ານ ຈາວິເອີ ມິເລຍ ທີ່ໄດ້ຄະແນນພຽງ 30% ແລະ ທ່ານ ປາທຣິເຈຍ ບູລຣິດ ໄດ້ຄະແນນ 24%.

# ເວທີປຶກສາຫາລືສຸດຍອດການຮ່ວມມືສາກົນໜຶ່ງແລວໜຶ່ງເສັ້ນທາງ ຄັ້ງທີ 3

ຕາມການລາຍງານຂ່າວໃຫ້ຮູ້ວ່າ: ເມື່ອວັນທີ 18 ຕຸລາຜ່ານມາ, ພິທີເປີດກອງປະຊຸມເວທີປຶກສາຫາລືສຸດຍອດການຮ່ວມມືສາກົນ "ໜຶ່ງແລວໜຶ່ງເສັ້ນທາງ" ຄັ້ງທີ 3 ໄດ້ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ ສປ ຈີນ ໂດຍແມ່ນທ່ານ ສີຈິ້ນຜິງ ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ ປະທານປະເທດຈີນ ປະທານຄະນະກຳມະການການທະຫານສູນກາງຈີນ ໄດ້ເຂົ້າຮ່ວມພິທີເປີດກອງປະຊຸມ ແລະ ກ່າວຄຳປາໄສ.

ທ່ານ ສີຈິ້ນຜິງ ກ່າວວ່າ: ການຮ່ວມມື "ໜຶ່ງແລວໜຶ່ງເສັ້ນທາງ" ໄດ້ຜ່ານຂັ້ນຕອນແຜນວາດອັນຍິ່ງໃຫຍ່ຈົນມາຮອດການປະຕິບັດໃຫ້ເປັນຮູບປະທຳ, ເຮັດໃຫ້ແຜນແມ່ບົດໄດ້ກາຍເປັນຈິງ; ພ້ອມດຽວກັນນີ້, ໂຄງການສັນຍາລັກ ກໍຄືໂຄງການທີ່ນຳເອົາຜົນປະໂຫຍດມາໃຫ້ແກ່ປະຊາຊົນຈຳນວນຫຼວງຫຼາຍໄດ້ຮັບການຈັດຕັ້ງປະຕິບັດນຳອີກ. ທ່ານ ສີຈິ້ນຜິງ ກ່າວວ່າ: ໃນຮອບ 10 ປີຜ່ານມາ, ພວກເຮົາໄດ້ຍຶດໝັ້ນອຸດົມການແຕ່ຫົວທີ ແລະ ຈັບມືກັນ ພ້ອມກັນກ້າວໄປຂ້າງໜ້າ ໂດຍໄດ້ຊຸກຍູ້ເຮັດໃຫ້ການຮ່ວມມືສາກົນ "ໜຶ່ງແລວໜຶ່ງເສັ້ນທາງ" ຈາກບໍ່ມີຕົວຕົນໄດ້ເປັນຮູບເປັນຮ່າງຂຶ້ນ ແລະ ໄດ້ຮັບການພັດທະນາຢ່າງແຂງແຮງ, ພ້ອມທັງໄດ້ຮັບຜົນງານອັນອຸດົມສົມບູນ. ທ່ານ ສີຈິ້ນຜິງ ກ່າວວ່າ: ໃນ 10 ປີຜ່ານມາ, ພວກເຮົາໄດ້ພະຍາຍາມສ້າງເຄືອຂ່າຍທີ່ເຊື່ອມໂຍງເຊື່ອມຈອດກັນໃນທົ່ວໂລກທີ່ຖືແລວເສດຖະກິດເປັນການນຳພາ, ຖືຊ່ອງທາງໃຫຍ່ ແລະ ຊ່ອງທາງຂໍ້ມູນຂ່າວສານທີ່ວ່ອງໄວເປັນໂຄງຮ່າງ, ຖືທາງລົດໄຟ, ທາງຫຼວງ, ສະໜາມບິນ, ທ່າກຳປັ່ນ ແລະ ລະບົບທໍ່ສົ່ງເປັນບ່ອນອີງ ແລະ ປົກຄຸມທາງບົກ, ທາງທະເລ, ທາງອາກາດ ແລະ ທາງອິນເຕີເນັດ ເຊິ່ງໄດ້ຊຸກຍູ້ການຈໍລະຈອນສິນຄ້າ, ການໝູນວຽນດ້ານເງິນທຶນ, ເຕັກນິກ ແລະ ບຸກຄະລາກອນຂອງປະເທດຕ່າງໆຢ່າງມີປະສິດທິຜົນ, ຊຸກຍູ້ໃຫ້ເສັ້ນທາງສາຍໄໝບູຮານທີ່ມີປະຫວັດມາເປັນເວລາພັນປີຟື້ນຟູຄວາມມີຊີວິດຊີວາໃນຍຸກໃໝ່. ທ່ານ ສີຈິ້ນຜິງ ກ່າວຕື່ມວ່າ: ການຮ່ວມກັນສ້າງໜຶ່ງແລວໜຶ່ງເສັ້ນທາງແມ່ນເນັ້ນໜັກການຮ່ວມແຮງຮ່ວມໃຈກັນແບບຫຼາຍຄົນຫາຟືນສຸມໄຟຈະໄດ້ແປວໄຟທີ່ສູງຂຶ້ນ, ຊ່ວຍເຫຼືອເຊິ່ງກັນແລະກັນຈະສາມາດກ້າວໄປໄກໄດ້, ສົ່ງເສີມການເຮັດໃຫ້ຕົນເອງມີການພັດທະນາທີ່ດີ ທັງເຮັດໃຫ້ຜູ້ອື່ນມີການພັດທະນາທີ່ດີເຊັ່ນດຽວກັນ, ປະຕິບັດການເຊື່ອມໂຍງເຊື່ອມຈອດກັນ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ສະແຫວງຫາການພັດທະນາຮ່ວມກັນ ແລະ ຮ່ວມມືແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດນຳກັນ. ບໍ່ເປັນປໍລະປັກກັນດ້ານຮູບຖານຈິດສຳນຶກ, ບໍ່ຫຼິ້ນເກມດ້ານພູມສາດການເມືອງບໍ່ຕໍ່ຕ້ານກັນທາງການເມືອງລະຫວ່າງຝ່າຍ, ຄັດຄ້ານການລົງໂທດພຽງລຳພັງແຕ່ຝ່າຍດຽວ, ຄັດຄ້ານການຂົ່ມຂູ່ດ້ານເສດຖະກິດ ແລະ ຍັງຄັດຄ້ານການຕັດສາຍພົວພັນກັນອີກດ້ວຍ.

ທ່ານ ສີຈິ້ນຜິງ ກ່າວອີກວ່າ: ຂ້າພະເຈົ້າຍິນດີປະກາດແຜນການດຳເນີນງານ 8 ລາຍການທີ່ຈີນສະໜັບສະໜູນການຮ່ວມກັນສ້າງໜຶ່ງແລວໜຶ່ງເສັ້ນທາງດ້ວຍຄຸນນະພາບສູງຄື: 1. ກໍ່ສ້າງເຄືອຂ່າຍເຊື່ອມໂຍງເຊື່ອມຈອດກັນສາມມິຕິ ໜຶ່ງແລວໜຶ່ງເສັ້ນທາງ, 2. ສະໜັບສະໜູນສ້າງເສດຖະກິດໂລກແບບເປີດກວ້າງ, 3. ດຳເນີນການຮ່ວມມືທີ່ຕິດແທດຕົວຈິງ, 4. ຊຸກຍູ້ການພັດທະນາສີຂຽວ, 5. ຊຸກຍູ້ການປະດິດສ້າງດ້ານວິທະຍາສາດເຕັກໂນໂລຊີ, 6. ສະໜັບສະໜູນການໄປມາຫາສູ່ກັນລະຫວ່າງປະຊາຊົນ, 7. ກໍ່ສ້າງເສັ້ນທາງທີ່ປອດໄສຂາວສະອາດ ແລະ 8. ບູລະນະກົນໄກການຮ່ວມມືສາກົນໜຶ່ງແລວໜຶ່ງເສັ້ນທາງ.

## ເຫັນໄວ້ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ຊີວິດປອດໄພ ແລະ ສຸກສະບາຍ ດ້ວຍທຸກຄົນເຄົາລົບ ແລະ ປະຕິບັດກົດໝາຍ

ຕາມຮູ້, ທຸກຄົນທີ່ໄດ້ໄປເຄື່ອນໄຫວເຮັດວຽກຢ້ຽມຢາມ ຫຼື ທ່ອງທ່ຽວຢູ່ປະເທດສິງກະໂປແລ້ວ ພໍກັບຮອດບ້ານເກີດເມືອງນອນກໍມັກຈະມີເລື່ອງເລົ່າທີ່ແປກໃໝ່-ໄດ້ສະຈັບໃຈຄົນລະແງ່ມູມ, ບາງຄົນເວົ້າເຖິງຄວາມສະອາດງາມຕາ, ບາງຄົນເວົ້າເຖິງຕົວເມືອງຂຽວ ທັງໆທີ່ມີຕຶກສູງຊັນບຽດກັນໃນພື້ນທີ່ທີ່ແສນຄັບແຄບ, ບາງຄົນຍ້ອງຍໍເລື່ອງລະບົບການໂດຍສານທີ່ແສນສະດວກສະບາຍ ແຕ່ທີ່ທຸກຄົນເວົ້າເປັນສຽງດຽວກັນນັ້ນ ກໍຄືເລື່ອງສະຕິກົດໝາຍຂອງຊາວສິງກະໂປ ທີ່ເຊື່ອມສານເຂົ້າໃນວິຖີຊີວິດ. **ສິງກະໂປ** ເປັນປະເທດຈະເລີນຮັ່ງມີໃນລະດັບແຖວໜ້າຂອງໂລກ ແຕ່ການໃຊ້ຊີວິດຂອງຄົນນັ້ນແມ່ນສຸດແສນປະຢັດ. ເພື່ອນໆສິງກະໂປເຄີຍເວົ້າໃຫ້ຜູ້ຂຽນຟັງວ່າ ການໃຊ້ຈ່າຍເພື່ອ Drive, Drink ແລະ Smoke ເຊິ່ງແປເປັນພາສາລາວ ການຊື້ລົດມາຂີ່, ຊື້ເຫຼົ້າມາດື່ມ ແລະ ຊື້ຢາມາສູບນັ້ນ ມີລາຄາແພງທີ່ສຸດໃນສິງກະໂປ. ທີ່ຝອຍມາພໍຫອມປາກຫອມຄໍ ແມ່ນເພື່ອໃຫ້ທ່ານຜູ້ອ່ານ ແນມເຫັນພາບລວມຂອງສິງກະໂປທີ່ເປັນປະເທດຮ່ວມສາຍຄາຄອບຄົວໃຫຍ່ອາຊຽນ ແຕ່ສິ່ງທີ່ຢາກລົງເລິກແດ່ ແມ່ນກ່ຽວກັບມາດຕະການທີ່ແສນເຄັ່ງຄັດ ແລະ ເດັດຂາດຂອງສິງກະໂປຕໍ່ຄະດີລັກລອບຄ້າ-ຂາຍຢາເສບຕິດ ທັງນີ້ກໍເພື່ອໃຫ້ສ່ອງຊ່ອງກັບບັນຍາກາດວັນຕ້ານຢາເສບຕິດແຫ່ງຊາດ ( 12 ຕຸລາ) ແລະ ວັນສາກົນເພື່ອຕ້ານຢາເສບຕິດ (26 ຕຸລາ). ຫຼາຍທ່ານອາດໄດ້ອ່ານຂ່າວການຕັດສິນປະຫານຊີວິດຜູ້ມີຢາເສບຕິດໄວ້ໃນຄອບຄອງຢູ່ສິງກະໂປໃນເດືອນຕຸລາ 2022 ເຊິ່ງໄດ້ກາຍເປັນຂ່າວດັງໄປທົ່ວໂລກ. ຜູ້ຕິດແຮ້ວຄະດີມໍລະນະດັ່ງກ່າວ ຊື່ວ່າ ທ້າວ ໂມຮາເມັດ ອານຊາຣີ ໂມຮາເມັດອັບດູນ ອາຊິດ (ຕໍ່ໄປຂໍເອີ້ນສັ້ນໆວ່າ ໂມຮາເມັດ) ອາຍຸ 49 ປີ; ຂ່າວບອກວ່າຜູ້ກ່ຽວຖືກເຈົ້າໜ້າທີ່ຕຳຫຼວດສິງກະໂປຈັບກຸມແຕ່ປີ 2016 ພຸ້ນ ແຕ່ເນື່ອງຈາກເປັນຄະດີຮ້າຍແຮງ ຈຶ່ງຕ້ອງໄດ້ໃຊ້ເວລາເກັບກຳຂໍ້ມູນຢ່າງຄົບຊຸດ. ທ້າວ ໂມຮາເມັດ ຖືກຈັບກຸມພ້ອມດ້ວຍຂອງກາງຄື: ຫໍ່ສານເສບຕິດຈຳນວນ 77 ຫໍ່ ລວມນ້ຳໜັກທັງໝົດ 750 ກຼາມ ແຕ່ເມື່ອເວລາພິສູດໄຈ້ແຍກຄັກແນ່ ກໍພົບວ່າ ໃນທັງໝົດ 77 ຫໍ່ນັ້ນ ມີສານເສບຕິດປະເພດເຮໂຣອີນ ສົດເຈືອປົນຢູ່ພຽງ 30,23 ກຼາມ. ແຕ່ຕາມກົດໝາຍຂອງສິງປະໂປ ນັ້ນ ເຮໂຣອີນ ຖືກກຳນົດວ່າເປັນປະເພດຢາເສບຕິດທີ່ຮ້າຍແຮງທີ່ສຸດ ຄືຜູ້ຕິດຄະດີ ເຮໂຣອີນ ນ້ຳໜັກພຽງ 15 ກຼາມ ກໍຈະໄດ້ຮັບໂທດປະຫານຊີວິດ. ການທີ່ຄະດີນີ້ແກ່ຍາວມາເປັນເວລາ 6 ປີນັ້ນກໍເພາະວ່າ ທ້າວ ໂມຮາເມັດ ປະຕິເສດວ່າ ຢາເສບຕິດນັ້ນແມ່ນຂອງສາວແບນລາ ຟາຕິດາ, ຄູ່ຮັກຄົນອິນໂດເນເຊຍ ທີ່ເອົາໄປປະໄວ້ຫ້ອງພັກຂອງເຂົາ ແຕ່ສານສູງໄດ້ປະຕິເສດຂໍ້ແກ້ຕົວດັ່ງກ່າວ ແລະ ຖືເອົາການຕັດສິນຂອງສານຊັ້ນຕົ້ນໃຫ້ປະຫານຊີວິດຜູ້ກະທຳຜິດ.

ໃນປັດຈຸບັນຫຼາຍປະເທດ ໄດ້ຜ່ອນຜັນໂທດ ໃນການຄ້າ-ຂາຍ ຫຼືມີໄວ້ໃນຄອບຄອງກັນຊາ ບາງປະເທດໄດ້ຍົກເອົາກັນຊາ ອອກຈາກບັນຊີຢາເສບຕິດປະເພດຮ້າຍແຮງ. ກັນຊາທາງການແພດ ໄດ້ກາຍເປັນ... ທ່າອ່ຽງລວມຂອງຫຼາຍປະເທດ ຄືໃຫ້ມີການຄົ້ນຄວ້າ, ທົດລອງເພື່ອສະກັດກັນຊາເປັນຢາປົວພະຍາດ ຢູ່ສິງກະໂປ ທາງການກໍໄດ້ອະນຸຍາດໃຫ້ມີການຄົ້ນຄວ້າທົດລອງເພື່ອນຳໃຊ້ກັນຊາເປັນຢາປົວພະຍາດ ແຕ່ພ້ອມດຽວກັນນັ້ນ ແມ່ນເດັດຂາດບໍ່ຍອມຜ່ອນຜັນໂທດ ໃນຄະດີຄ້າ-ຂາຍກັນຊາ ແລະ ບໍ່ຍົກກັນຊາອອກຈາກບັນຊີຢາເສບຕິດປະເພດຮ້າຍແຮງ. ກັນຊາທາງການແພດ ຢູ່ສິງກະໂປ ມີການຄວບຄຸມຢ່າງເຄັ່ງຄັດຮັດກຸມທີ່ສຸດ ເພື່ອສະກັດກັ້ນການສວຍໂອກາດເຮັດໃຫ້ຢາເສບຕິດປະເພດນີ້ແຜ່ລາມເປັນໄພສັງຄົມ ເຊັ່ນຢູ່ບາງປະເທດທີ່ປະກາດນະໂຍບາຍ "ກັນຊາເສລີ" "ກັນຊາທາງການແພດ" ແຕ່ໃນທີ່ສຸດກໍເປັນ "ກັນຊາເພື່ອກິນມອມເມົາ".




## ຍອດຄົນງານ

*#ບ່າວກະບື*

"ອື້ມ... ຫົວໜ້າຜູ້ກ່ອນຂອງເຈົ້າ ໄດ້ອອກໃບຢັ້ງຢືນຫຍັງໃຫ້ເຈົ້າແດ່ບໍ່?"

"ໃຫ້ຢູ່... ແຕ່ຂ້ານ້ອຍປະໄວ້ເຮືອນ".

"ໃບຢັ້ງຢືນນັ້ນຂຽນວ່າແນວໃດ?"

"ເອີ... ລະແມ່ນວ່າ, ມັນຂຽນວ່າ ຂ້ານ້ອຍເປັນໜຶ່ງໃນຈຳນວນລູກຈ້າງທີ່ດີທີ່ສຸດທີ່ລາວເຄີຍໄລ່ອອກ..."

## BEST EMPLOYEE

*#BAOKBU*

"Did your previous employer give you a reference?"

"Yes, but i left it at home."

"What does it say?"

"Er... well, it says i was one of the best employees he had ever fired..."

ອ່ານມ່ວນ ຊວນຍິ້ມ




ການປຸງແຕ່ງອາຫານຕ້ອງຮັບປະກັນຄວາມສະອາດ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ
EPL GROUP SOLE CO.,LTD

**ຜູ້ຊີ້ນຳ :** ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ;
ນາງ ສຸພາວັນ ທອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄູນປາກດີ

: www.na.gov.la; : ຂ່າວ "ຜູ້ແທນປະຊາຊົນ" Phouthen Pasaxon News; : Lao NA Media; APP: Lao NA.